ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ 010 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 23 ມັງກອນ 2025

# ລັດຖະດຳລັດ

## ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍການສຶກສາ (ສະບັບປັບປຸງ)

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 148/ສພຊ, ລົງວັນທີ 11 ທັນວາ 2024 ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍການສຶກສາ (ສະບັບປັບປຸງ);
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 06/ຄປຈ, ລົງວັນທີ 9 ມັງກອນ 2025.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

**ມາດຕາ 1** ປະກາດໃຊ້ກົດໝາຍວ່າດ້ວຍການສຶກສາ (ສະບັບປັບປຸງ).

**ມາດຕາ 2** ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

**ທອງລຸນ ສີສຸລິດ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 148 / ສພຊ

ນະຄອນຫຼວງວຽງຈັນ, ວັນທີ 11 / 12 / 24

# ມະຕິ
## ກອງປະຊຸມສະພາແຫ່ງຊາດ
## ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍການສຶກສາ (ສະບັບປັບປຸງ)

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 63/ສພຊ, ລົງວັນທີ 8 ທັນວາ 2015 ມາດຕາ 53 ຂໍ້ 1;
- ອີງຕາມກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020 ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 8 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍການສຶກສາ (ສະບັບປັບປຸງ) ໃນວາລະຂອງກອງປະຊຸມຕອນບ່າຍຂອງວັນທີ 5 ທັນວາ 2024 ແລະ ຖືກພິຈາລະນາຮັບຮອງເອົາໃນວາລະຕອນບ່າຍຂອງວັນທີ 11 ທັນວາ 2024.

**ກອງປະຊຸມສະພາແຫ່ງຊາດ ຕົກລົງ:**

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍການສຶກສາ (ສະບັບປັບປຸງ) ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສະມາຊິກສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປອ ໄຊສົມພອນ ພົມວິຫານ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 69 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 11 ທັນວາ 2024

# ກົດໝາຍ
# ວ່າດ້ວຍການສຶກສາ
# (ສະບັບປັບປຸງ)

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 (ປັບປຸງ) ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການ ຄຸ້ມຄອງ, ຕິດຕາມ, ກວດກາ ວຽກງານສຶກສາ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ໄດ້ມາດຕະຖານ, ມີຄຸນນະພາບ, ມີຄວາມຍືນຍົງ ແນໃສ່ຮັບປະກັນການພັດທະນາຊັບພະຍາກອນມະນຸດ ໃຫ້ກາຍເປັນພົນລະເມືອງດີ, ມີຄຸນສົມບັດສົມທຳປະຕິວັດ, ມີຄວາມຮູ້, ຄວາມສາມາດ, ມີວິຊາຊີບ, ມີຄວາມຊຳນານງານ, ມີສຸຂະພາບພະລານາໄມ, ຮູ້ປົກປັກຮັກສາ ແລະ ສົ່ງເສີມ ສິລະປະ, ວັດທະນະທຳ ແລະ ຮີດຄອງປະເພນີອັນດີງາມຂອງ ຊາດ, ທ້ອງຖິ່ນ, ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ.

**ມາດຕາ 2 (ປັບປຸງ) ການສຶກສາ**

ການສຶກສາ ແມ່ນ ຂະບວນການສອນ, ການຮຽນຮູ້ທາງດ້ານທິດສະດີ ແລະ ພຶດຕິກຳຕົວຈິງ ກ່ຽວກັບວິທະຍາສາດທຳມະຊາດ, ວິທະຍາສາດສັງຄົມ, ເຕັກໂນໂລຊີ ແລະ ນະວັດຕະກຳ ເພື່ອພັດທະນາຊັບພະຍາກອນມະນຸດ ຢ່າງຮອບດ້ານ.

**ມາດຕາ 3 (ປັບປຸງ) ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ພົນລະເມືອງ** ໝາຍເຖິງ ຄົນລາວ, ຄົນຕ່າງດ້າວ, ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ດຳລົງຊີວິດຢູ່ ສປປ ລາວ;
2. **ຄອບຄົວ** ໝາຍເຖິງ ພໍ່, ແມ່ ຫຼື ຜູ້ປົກຄອງຂອງຜູ້ຮຽນ;
3. **ທຸດຈະລິດ** ໝາຍເຖິງ ຄວາມລຳອຽງ, ຕົວະຍົວະ ແລະ ບໍ່ສັດຊື່ບໍລິສຸດ;

4. **ການວັດຜົນ** ໝາຍເຖິງ ຂະບວນການຈັດຫາຂໍ້ມູນ ກ່ຽວກັບຜົນສຳເລັດການຮຽນຂອງຜູ້ຮຽນ ເພື່ອນຳໄປສູ່ການຕັດສິນຄຸນຄ່າ ດ້ວຍຫຼາຍວິທີການ ເຊັ່ນ ການກວດກາ, ການທົດສອບ, ການສອບເສັງ ແລະ ອື່ນໆ;

5. **ການປະເມີນຜົນ** ໝາຍເຖິງ ການນຳເອົາຜົນການວັດຜົນ ມາຕັດສິນຄຸນຄ່າຂອງຜົນສຳເລັດທາງການຮຽນ;

6. **ຄະນະພັດທະນາການສຶກສາ** ໝາຍເຖິງ ການຈັດຕັ້ງໜຶ່ງ ທີ່ມີຄວາມຮັບຜິດຊອບໃນການພັດທະນາການສຶກສາ ທັງໃນ ແລະ ນອກໂຮງຮຽນ ເພື່ອຊຸກຍູ້, ສົ່ງເສີມ ແລະ ອຳນວຍຄວາມສະດວກ ໃຫ້ທຸກຄົນໄດ້ຮັບການສຶກສາ ຢ່າງທົ່ວເຖິງ ຊຶ່ງປະກອບດ້ວຍ ບຸກຄະລາກອນຈາກພາກສ່ວນຕ່າງໆ ທີ່ກ່ຽວຂ້ອງ.

**ມາດຕາ 4 (ປັບປຸງ) ນະໂຍບາຍຂອງລັດ ກ່ຽວກັບວຽກງານສຶກສາ**

ລັດ ຖືເອົາການສຶກສາ ໄປກ່ອນກ້າວໜຶ່ງ ແລະ ເປັນວຽກງານໃຈກາງຂອງການພັດທະນາຊັບພະຍາກອນມະນຸດ ແລະ ສົ່ງເສີມທຸກ ເພດ, ໄວ ແລະ ເຜົ່າ ໃຫ້ເຂົ້າເຖິງການສຶກສາ.

ລັດ ເອົາໃຈໃສ່ຂະຫຍາຍການສຶກສາກ່ອນໄວຮຽນ, ສົ່ງເສີມ ການອະນາໄມ, ສຸຂະພາບ, ໂພຊະນາການຂັ້ນພື້ນຖານ ໃນໂຮງຮຽນ ແລະ ຖືເອົາການສຶກສາພາກບັງຄັບ ເປັນການສຶກສາທີ່ບໍ່ໃຫ້ເສຍຄ່າ ຢູ່ສະຖານການສຶກສາຂອງລັດ.

ລັດ ເພີ່ມທະວີການລົງທຶນ ເຂົ້າໃນການພັດທະນາການສຶກສາ ໃຫ້ມີຄຸນນະພາບ, ຂະຫຍາຍຕົວ ຢ່າງທົ່ວເຖິງ, ພ້ອມກັນນັ້ນ ກໍເອົາໃຈໃສ່ ສ້າງ, ພັດທະນາ ແລະ ປະຕິບັດນະໂຍບາຍຕໍ່ ຄູ, ບຸກຄະລາກອນການສຶກສາ ແລະ ຜູ້ຮຽນ ຢ່າງເໝາະສົມ.

ລັດ ຊຸກຍູ້ ແລະ ສົ່ງເສີມ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ໃຫ້ລົງທຶນເຂົ້າໃນການພັດທະນາການສຶກສາ ໂດຍສະເພາະອາຊີວະສຶກສາ ແລະ ການຝຶກອົບຮົມວິຊາຊີບ ໃຫ້ໄດ້ມາດຕະຖານ, ມີຄຸນນະພາບ ດ້ວຍນະໂຍບາຍສົ່ງເສີມດ້ານຕ່າງໆ ເປັນຕົ້ນ ສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກ, ນະໂຍບາຍສິນເຊື່ອ, ຍົກເວັ້ນ ຫຼື ຫຼຸດຜ່ອນພາສີ, ອາກອນ ແລະ ຄ່າທຳນຽມ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 5 (ປັບປຸງ) ຫຼັກການ ກ່ຽວກັບວຽກງານສຶກສາ**

ວຽກງານສຶກສາ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ແນວທາງ ນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ, ແຜນຍຸດທະສາດການພັດທະນາຊັບພະຍາກອນມະນຸດ ແຫ່ງຊາດ ແລະ ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ໃນແຕ່ລະໄລຍະ;

2. ຮັບປະກັນ ສາມ ລັກສະນະ ຄື ລັກສະນະຊາດ, ລັກສະນະວິທະຍາສາດ ແລະ ທັນສະໄໝ, ລັກສະນະມະຫາຊົນ;

3. ປະຕິບັດ ຫ້າ ຫຼັກມູນ ຄື ຄຸນສົມບັດສຶກສາ, ປັນຍາສຶກສາ, ແຮງງານສຶກສາ, ພະລະສຶກສາ ແລະ ສິລະປະສຶກສາ ຢ່າງເປັນເອກະພາບ;

4. ຮັບປະກັນໃຫ້ການຮຽນ ມີຄວາມຕໍ່ເນື່ອງ ແລະ ໄປຄຽງຄູ່ກັບການປະຕິບັດຕົວຈິງ;

5. ຮັບປະກັນຄວາມສະເໝີພາບ, ຖືກຕ້ອງ, ໂປ່ງໃສ, ເປີດເຜີຍ, ຍຸຕິທຳ ແລະ ສາມາດກວດສອບໄດ້;

6. ປະສານສົມທົບ ລະຫວ່າງ ການສຶກສາ ໃນໂຮງຮຽນ ແລະ ນອກໂຮງຮຽນ ກັບການສຶກສາອົບຮົມຢູ່ໃນຄອບຄົວ ແລະ ສັງຄົມ;

7. ຮັບປະກັນຄຸນນະພາບ, ເຊື່ອມໂຍງເຂົ້າກັບການສຶກສາພາກພື້ນ ແລະ ສາກົນ.

**ມາດຕາ 6 (ປັບປຸງ) ສິດຂອງພົນລະເມືອງໃນການສຶກສາ**

ພົນລະເມືອງທຸກຄົນ ໂດຍບໍ່ຈຳແນກ ສັນຊາດ, ເຊື້ອຊາດ, ສາສະໜາ, ເຜົ່າ, ເພດ, ໄວ, ສະຖານະພາບທາງດ້ານຮ່າງກາຍ ແລະ ດ້ານເສດຖະກິດ-ສັງຄົມ ລ້ວນແຕ່ມີສິດໄດ້ຮັບການສຶກສາທີ່ມີຄຸນນະພາບ, ການຮຽນຮູ້ຕະຫຼອດຊີວິດ ຢ່າງເທົ່າທຽມກັນ ຕາມກົດໝາຍ.

**ມາດຕາ 7 (ປັບປຸງ) ພັນທະຂອງພົນລະເມືອງຕໍ່ການສຶກສາ**

ພົນລະເມືອງທຸກຄົນ ລ້ວນແຕ່ມີພັນທະໃນການ ຊຸກຍູ້, ສົ່ງເສີມ ແລະ ປະກອບ ທຶນ, ວັດຖຸປະກອນ, ເຫື່ອແຮງ, ສະຕິປັນຍາ ລວມທັງການສຶກສາອົບຮົມ, ຊ່ວຍເຫຼືອ ຜູ້ຮຽນ, ຄູ ແລະ ບຸກຄະລາກອນການສຶກສາ ເພື່ອພັດທະນາການສຶກສາ ໃຫ້ມີຄຸນນະພາບ.

**ມາດຕາ 8 (ປັບປຸງ) ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ພາກລັດ ແລະ ເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວ ແລະ ພົວພັນກັບ ວຽກງານສຶກສາ ຢູ່ ສປປ ລາວ.

**ມາດຕາ 9 (ປັບປຸງ) ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນ ຮ່ວມມືກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານສຶກສາ ດ້ວຍການແລກປ່ຽນບົດຮຽນດ້ານ ວິຊາການ, ວິທະຍາສາດ, ເຕັກໂນໂລຊີ, ຂໍ້ມູນ ຂ່າວສານ ແລະ ການສື່ສານ, ການຄົ້ນຄວ້າ, ການສິດສອນ, ການຄຸ້ມຄອງບໍລິຫານການສຶກສາ ເພື່ອພັດທະນາວຽກງານສຶກສາ, ປະຕິບັດສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ.

## ພາກທີ II
## ລະບົບການສຶກສາແຫ່ງຊາດ

**ມາດຕາ 10 (ໃໝ່) ລະບົບການສຶກສາແຫ່ງຊາດ**

ລະບົບການສຶກສາແຫ່ງຊາດ ປະກອບດ້ວຍ:

1. ການສຶກສາໃນໂຮງຮຽນ;
2. ການສຶກສານອກໂຮງຮຽນ.

### ໝວດທີ 1
### ການສຶກສາໃນໂຮງຮຽນ

**ມາດຕາ 11 ການສຶກສາໃນໂຮງຮຽນ**

ການສຶກສາໃນໂຮງຮຽນ ແມ່ນ ການຈັດຕັ້ງການຮຽນ ການສອນ ຢູ່ໃນໂຮງຮຽນ ຢ່າງເປັນລະບົບປົກກະຕິ, ມີກຳນົດເວລາຮຽນ ແລະ ມີເນື້ອໃນຫຼັກສູດທີ່ຖືກຕ້ອງ ຕາມມາດຕະຖານການສຶກສາແຫ່ງຊາດ.

ການສຶກສາໃນໂຮງຮຽນ ປະກອບດ້ວຍ:

1. ການສຶກສາກ່ອນໄວຮຽນ;
2. ສາມັນສຶກສາ;

3. ອາຊີວະສຶກສາ;
4. ການສຶກສາຊັ້ນສູງ.

**ມາດຕາ 12 ການສຶກສາກ່ອນໄວຮຽນ**

ການສຶກສາກ່ອນໄວຮຽນ ແມ່ນ ການລ້ຽງດູ, ການຮຽນ ການສອນ ເດັກ ໃນສະຖານການສຶກສາກ່ອນໄວຮຽນ ໂດຍມີຈຸດໝາຍ ພັດທະນາເດັກ ໃຫ້ມີການຂະຫຍາຍຕົວ ແລະ ພັດທະນາການທາງດ້ານ ຮ່າງກາຍ, ສະຕິປັນຍາ, ອາລົມຈິດ, ພາສາ ແລະ ຮຽນຮູ້ຊີວິດສັງຄົມ ເພື່ອກຽມຄວາມພ້ອມ ເຂົ້າຮຽນຊັ້ນປະຖົມສຶກສາ.

**ມາດຕາ 13 ໂຄງປະກອບການສຶກສາກ່ອນໄວຮຽນ**

ໂຄງປະກອບການສຶກສາກ່ອນໄວຮຽນ ປະກອບດ້ວຍ:

1. ຊັ້ນລ້ຽງເດັກ ຮັບເດັກອາຍຸແຕ່ ສາມເດືອນ ຫາ ຕໍ່າກວ່າ ສາມປີ;
2. ຊັ້ນອະນຸບານສຶກສາ ຮັບເດັກອາຍຸແຕ່ ສາມປີ ຫາຕໍ່າກວ່າ ຫົກປີ.

ໃນຊັ້ນອະນຸບານສຶກສາ ຍັງມີກຸ່ມຮຽນຜ່ານການຫຼິ້ນ ແລະ ຫ້ອງກຽມປະຖົມ.

**ມາດຕາ 14 (ປັບປຸງ) ສາມັນສຶກສາ**

ສາມັນສຶກສາ ແມ່ນ ການຮຽນ ການສອນ ຄວາມຮູ້ພື້ນຖານທົ່ວໄປ ໂດຍມີຈຸດໝາຍພັດທະນາຜູ້ຮຽນຮອບດ້ານ ໃຫ້ມີຄວາມຮູ້, ຄວາມສາມາດ ແລະ ທັກສະ ກ່ຽວກັບ ພາສາລາວ, ຄະນິດສາດ ແລະ/ຫຼື ພາສາຕ່າງປະເທດໃດໜຶ່ງຂັ້ນພື້ນຖານ, ມີຄວາມຮູ້ ດ້ານວິທະຍາສາດທຳມະຊາດ, ວິທະຍາສາດສັງຄົມ, ກິລາ-ກາຍຍະກຳ, ສິລະປະ, ເຕັກໂນໂລຊີ ແລະ ວິຊາຊີບ ເພື່ອກຽມເຂົ້າຮຽນຕໍ່ໃນສາຍອາຊີວະສຶກສາ ແລະ ການສຶກສາຊັ້ນສູງ ຫຼື ປະກອບອາຊີບ.

**ມາດຕາ 15 (ປັບປຸງ) ໂຄງປະກອບສາມັນສຶກສາ**

ໂຄງປະກອບສາມັນສຶກສາ ປະກອບດ້ວຍ:

1. ຊັ້ນປະຖົມສຶກສາ;
2. ຊັ້ນມັດທະຍົມສຶກສາຕອນຕົ້ນ;
3. ຊັ້ນມັດທະຍົມສຶກສາຕອນປາຍ.

ສຳລັບ ເນື້ອໃນລະອຽດຂອງສາມັນສຶກສາແຕ່ລະຊັ້ນ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 16 (ປັບປຸງ) ອາຊີວະສຶກສາ**

ອາຊີວະສຶກສາ ແມ່ນ ການສຶກສາເຕັກນິກວິຊາຊີບ ແລະ ການຝຶກອົບຮົມວິຊາຊີບ ໂດຍມີຈຸດປະສົງ ສ້າງ, ພັດທະນາຜູ້ຮຽນວິຊາຊີບ ໃຫ້ມີ ຄວາມຮູ້, ຄວາມສາມາດ, ຄວາມຊຳນານງານ, ວິໄນແຮງງານ, ວິຊາຊີບ ແລະ ມີວຽກເຮັດງານທຳ.

**ມາດຕາ 17 (ປັບປຸງ) ໂຄງປະກອບອາຊີວະສຶກສາ**

ໂຄງປະກອບອາຊີວະສຶກສາ ປະກອບດ້ວຍ:

1. ອາຊີວະສຶກສາຊັ້ນຕົ້ນ;
2. ອາຊີວະສຶກສາຊັ້ນກາງ;

3. ອາຊີວະສຶກສາຊັ້ນສູງ.

ສໍາລັບ ເນື້ອໃນລະອຽດຂອງອາຊີວະສຶກສາແຕ່ລະຊັ້ນ ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍອາຊີວະສຶກສາ.

**ມາດຕາ 18 (ປັບປຸງ) ການສຶກສາຊັ້ນສູງ**

ການສຶກສາຊັ້ນສູງ ແມ່ນ ການສຶກສາຖັດຈາກຊັ້ນມັດທະຍົມສຶກສາຕອນປາຍ ຫຼື ທຽບເທົ່າ ຫຼື ອາຊີວະສຶກສາ ເພື່ອສົ່ງເສີມການຮຽນຮູ້ຕະຫຼອດຊີວິດ ໂດຍມີຈຸດໝາຍ ສ້າງ ແລະ ພັດທະນາ ຜູ້ບໍລິຫານ, ນັກວິຊາການ, ນັກວິຊາສະເພາະ, ນັກຄົ້ນຄວ້າ ແລະ ນັກວິທະຍາສາດ.

**ມາດຕາ 19 (ປັບປຸງ) ໂຄງປະກອບການສຶກສາຊັ້ນສູງ**

ໂຄງປະກອບການສຶກສາຊັ້ນສູງ ປະກອບດ້ວຍ:

1. ຊັ້ນປະລິນຍາຕີ;
2. ຊັ້ນປະລິນຍາໂທ;
3. ຊັ້ນປະລິນຍາເອກ.

ສໍາລັບ ເນື້ອໃນລະອຽດຂອງການສຶກສາຊັ້ນສູງແຕ່ລະຊັ້ນ ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍການສຶກສາຊັ້ນສູງ.

## ໝວດທີ 2
## ການສຶກສານອກໂຮງຮຽນ

**ມາດຕາ 20 ການສຶກສານອກໂຮງຮຽນ**

ການສຶກສານອກໂຮງຮຽນ ແມ່ນ ການຈັດການຮຽນ ການສອນ ທີ່ມີເນື້ອໃນຫຼັກສູດ ແລະ ຊັ້ນຮຽນຕ່າງໆ ຄືກັນກັບການສຶກສາໃນໂຮງຮຽນ ຕ່າງແຕ່ວິທີການຈັດການຮຽນ ການສອນ, ເວລາ, ຮູບການ ຕາມເງື່ອນໄຂຄວາມສາມາດ ແລະ ຄວາມພ້ອມຂອງຜູ້ຮຽນ. ການຮຽນໜັງສື ຕ້ອງຄວບຄູ່ກັບການຝຶກອົບຮົມວິຊາຊີບຂັ້ນພື້ນຖານ.

ການສຶກສານອກໂຮງຮຽນ ປະກອບດ້ວຍ ການສຶກສານອກໂຮງຮຽນຕາມລະບົບປົກກະຕິ ແລະ ການສຶກສາຕາມອັດທະຍາໄສ.

**ມາດຕາ 21 ການສຶກສານອກໂຮງຮຽນຕາມລະບົບປົກກະຕິ**

ການສຶກສານອກໂຮງຮຽນຕາມລະບົບປົກກະຕິ ມີ ດັ່ງນີ້:

1. ການລຶບລ້າງຄວາມບໍ່ຮູ້ໜັງສື;
2. ການບໍາລຸງຍົກລະດັບການສຶກສາ;
3. ການຝຶກອົບຮົມວິຊາຊີບຂັ້ນພື້ນຖານ.

**ມາດຕາ 22 (ປັບປຸງ) ການລຶບລ້າງຄວາມບໍ່ຮູ້ໜັງສື**

ການລຶບລ້າງຄວາມບໍ່ຮູ້ໜັງສື ແມ່ນ ການຈັດການຮຽນ ການສອນ ໃຫ້ກຸ່ມເປົ້າໝາຍ ຜູ້ທີ່ດ້ອຍໂອກາດ ແລະ ບໍ່ມີເງື່ອນໄຂໄດ້ເຂົ້າຮຽນ ໂດຍມີຈຸດໝາຍ ໃຫ້ຜູ້ຮຽນສາມາດ ຟັງ, ເວົ້າ, ອ່ານ, ຂຽນ ພາສາລາວ ແລະ ຄິດໄລ່ເລກ ໄດ້ຂັ້ນພື້ນຖານ.

**ມາດຕາ 23 ການບຳລຸງຍົກລະດັບການສຶກສາ**

ການບຳລຸງຍົກລະດັບການສຶກສາ ແມ່ນ ການຈັດການຮຽນ ການສອນ ທີ່ສືບຕໍ່ຈາກການລຶບລ້າງຄວາມບໍ່ຮູ້ໜັງສື ເພື່ອເຂົ້າຮຽນຊັ້ນປະຖົມສຶກສາ, ຊັ້ນມັດທະຍົມສຶກສາ ຫຼື ສູງກວ່ານັ້ນ ໂດຍມີຈຸດໝາຍໃຫ້ຜູ້ຮຽນມີຄວາມຮູ້, ຄວາມສາມາດ ທາງດ້ານວິທະຍາສາດ ແລະ ເຕັກນິກສູງຂຶ້ນ ເພື່ອຍົກຄຸນນະພາບຊີວິດຂອງຕົນ.

**ມາດຕາ 24 ການຝຶກອົບຮົມວິຊາຊີບຂັ້ນພື້ນຖານ**

ການຝຶກອົບຮົມວິຊາຊີບຂັ້ນພື້ນຖານ ແມ່ນ ການພັດທະນາຄວາມຮູ້, ທັກສະ, ຄວາມຊຳນານ ແລະ ຄຸນສົມບັດ ໃນການປະກອບອາຊີບໃດໜຶ່ງ ລວມທັງການພັດທະນາອາຊີບເດີມໃຫ້ດີຂຶ້ນ ໂດຍມີຈຸດໝາຍສ້າງຄວາມໝັ້ນຄົງໃຫ້ແກ່ຕົນເອງ ແລະ ຄອບຄົວ.

**ມາດຕາ 25 ການສຶກສາຕາມອັດທະຍາໄສ**

ການສຶກສາຕາມອັດທະຍາໄສ ແມ່ນ ການສຶກສາທີ່ມີເນື້ອໃນກວ້າງຂວາງ ແລະ ບໍ່ຈຳກັດຂອບເຂດ ທັງແມ່ນການຮຽນ, ການຄົ້ນຄວ້າດ້ວຍຕົນເອງ ດ້ວຍຫຼາຍວິທີ ລວມທັງຜ່ານສື່ຕ່າງໆ ຊຶ່ງບໍ່ຈຳກັດເວລາ, ເນື້ອໃນ ແລະ ສະຖານທີ່ຮຽນ. ພົນລະເມືອງ ທຸກຄົນ ໄດ້ຮັບການສົ່ງເສີມ ໃຫ້ໄດ້ຮັບການສຶກສາຕາມອັດທະຍາໄສ.

**ມາດຕາ 26 ຮູບແບບການຈັດການຮຽນ ການສອນ ການສຶກສານອກໂຮງຮຽນ**

ການສຶກສານອກໂຮງຮຽນ ມີຮູບແບບການຈັດການຮຽນ ການສອນ ດັ່ງນີ້:

1. ການຈັດການຮຽນ ການສອນ ແບບປະຈຳທີ່;
2. ການຈັດການຮຽນ ການສອນ ແບບເຄື່ອນທີ່;
3. ການຈັດການຮຽນ ການສອນ ແບບທາງໄກ.

ການຈັດການຮຽນ ການສອນ ລວມທັງການຄຸ້ມຄອງໃນແຕ່ລະຮູບແບບນັ້ນ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ພາກທີ III
## ການສຶກສາຂັ້ນພື້ນຖານ, ການສຶກສາພາກບັງຄັບ ແລະ ການຮຽນຮູ້ຕະຫຼອດຊີວິດ

**ມາດຕາ 27 (ປັບປຸງ) ການສຶກສາຂັ້ນພື້ນຖານ**

ການສຶກສາຂັ້ນພື້ນຖານ ແມ່ນ ການຮຽນ ການສອນ ກ່ຽວກັບຄວາມຮູ້ຂັ້ນພື້ນຖານ ເພື່ອສາມາດປະກອບອາຊີບ ແລະ ດຳລົງຊີວິດ ຢູ່ໃນສັງຄົມ ພ້ອມທັງເປັນພື້ນຖານໃຫ້ແກ່ການຮຽນຮູ້ໃນຂັ້ນຕໍ່ໄປ.

ລັດ ກຳນົດເອົາ ແຕ່ຊັ້ນປະຖົມສຶກສາ ຫາ ຊັ້ນມັດທະຍົມສຶກສາຕອນຕົ້ນ ເປັນການສຶກສາຂັ້ນພື້ນຖານ.

**ມາດຕາ 28 (ປັບປຸງ) ການສຶກສາພາກບັງຄັບ**

ການສຶກສາພາກບັງຄັບ ແມ່ນ ການສຶກສາທີ່ຈຳເປັນ ສຳລັບພົນລະເມືອງທຸກຄົນ ຊຶ່ງຕ້ອງຮຽນໃຫ້ຈົບ.

ລັດ ກຳນົດເອົາການສຶກສາ ຈົບຊັ້ນມັດທະຍົມສຶກສາຕອນຕົ້ນ ເປັນການສຶກສາພາກບັງຄັບ.

**ມາດຕາ 29 ການຮຽນຮູ້ຕະຫຼອດຊີວິດ**

ການຮຽນຮູ້ຕະຫຼອດຊີວິດ ແມ່ນ ການສຶກສາທີ່ປະສົມປະສານ ລະຫວ່າງການສຶກສາໃນໂຮງຮຽນ ແລະ ນອກໂຮງຮຽນ ເພື່ອສົ່ງເສີມໃຫ້ທຸກຄົນ ທັງຍິງ ແລະ ຊາຍ ໄດ້ຮັບການຮຽນຮູ້ຕະຫຼອດຊີວິດ ເພື່ອສ້າງສັງຄົມພູມປັນຍາ ຕາມຄວາມຮຽກຮ້ອງຕ້ອງການຂອງການພັດທະນາ.

## ພາກທີ IV
## ສະຖານການສຶກສາ

**ມາດຕາ 30 ສະຖານການສຶກສາ**

ສະຖານການສຶກສາ ແມ່ນ ບ່ອນດຳເນີນການຮຽນ ການສອນ, ການຄົ້ນຄວ້າ ວິໄຈ, ການຝຶກອົບຮົມ, ການຝຶກປະຕິບັດຕົວຈິງ ທັງໃນໂຮງຮຽນ ແລະ ນອກໂຮງຮຽນ ທັງພາກລັດ ແລະ ເອກະຊົນ ຊຶ່ງປະກອບດ້ວຍ ສູນ, ໂຮງຮຽນ, ວິທະຍາໄລ, ສະຖາບັນ ຫຼື ວິທະຍາຄານ ແລະ ມະຫາວິທະຍາໄລ.

**ມາດຕາ 31 (ປັບປຸງ) ປະເພດສະຖານການສຶກສາ**

ສະຖານການສຶກສາ ແບ່ງອອກເປັນປະເພດ ດັ່ງນີ້:

1. ສະຖານການຮຽນ ການສອນ ການສຶກສາກ່ອນໄວຮຽນ ເອີ້ນວ່າ ໂຮງລ້ຽງເດັກ, ສູນພັດທະນາເດັກ ແລະ ໂຮງຮຽນອະນຸບານ;
2. ສະຖານການຮຽນ ການສອນ ສາມັນສຶກສາ ເອີ້ນວ່າ ໂຮງຮຽນມູນລະປະຖົມ, ໂຮງຮຽນປະຖົມສົມບູນ, ໂຮງຮຽນມັດທະຍົມຕອນຕົ້ນ, ໂຮງຮຽນມັດທະຍົມຕອນປາຍ, ໂຮງຮຽນມັດທະຍົມສົມບູນ ແລະ ໂຮງຮຽນສາມັນວິຊາຊີບ;
3. ສະຖານການຮຽນ ການສອນ ອາຊີວະສຶກສາ ເອີ້ນວ່າ ສູນຝຶກອົບຮົມ, ໂຮງຮຽນ, ວິທະຍາໄລ ແລະ ສະຖາບັນ;
4. ສະຖານການຮຽນ ການສອນ ການສຶກສາຊັ້ນສູງ ເອີ້ນວ່າ ວິທະຍາໄລ, ສະຖາບັນ ຫຼື ວິທະຍາຄານ ແລະ ມະຫາວິທະຍາໄລ;
5. ສະຖານການຮຽນ ການສອນ ການສຶກສານອກໂຮງຮຽນ ເອີ້ນວ່າ ສູນການສຶກສານອກໂຮງຮຽນຂັ້ນຕ່າງໆ.

ໃນກໍລະນີຈຳເປັນ ສະຖານການສຶກສາແຕ່ລະປະເພດ ອາດຈະມີການເພີ່ມເຕີມ ຫຼື ປ່ຽນແປງ ຕາມການຕົກລົງຂອງກະຊວງສຶກສາທິການ ແລະ ກິລາ.

**ມາດຕາ 32 ມາດຕະຖານສະຖານການສຶກສາ**

ສະຖານການສຶກສາ ທັງພາກລັດ ແລະ ເອກະຊົນ ມີມາດຕະຖານຕົ້ນຕໍ ຄື ຫຼັກສູດ, ສື່ການຮຽນ ການສອນ, ຄູ ແລະ ບຸກຄະລາກອນການສຶກສາ, ໂຄງລ່າງພື້ນຖານ ແລະ ສິ່ງອຳນວຍຄວາມສະດວກ.

ມາດຕະຖານລະອຽດຂອງສະຖານການສຶກສາ ລວມທັງການສຶກສາສຳລັບຄົນພິການ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 33 (ປັບປຸງ) ການສ້າງຕັ້ງສະຖານການສຶກສາ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງສ້າງຕັ້ງສະຖານການສຶກສາ ໃຫ້ຍື່ນຄໍາຮ້ອງຕໍ່ຂະແໜງການສຶກສາທິການ ແລະ ກິລາ ເພື່ອພິຈາລະນາ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍສະບັບນີ້, ກົດໝາຍອື່ນ ແລະ ລະບຽບການທີ່ກ່ຽວຂ້ອງ.

ການພິຈາລະນາ ການສ້າງຕັ້ງສະຖານການສຶກສາ ທັງພາກລັດ ແລະ ເອກະຊົນ ຕ້ອງໃຫ້ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ, ແຜນຍຸດທະສາດການພັດທະນາຊັບພະຍາກອນມະນຸດ ແຫ່ງຊາດ ແລະ ມາດຕະຖານການສ້າງຕັ້ງສະຖານການສຶກສາ ທີ່ກະຊວງສຶກສາທິການ ແລະ ກິລາ ກໍານົດ.

ສໍາລັບການສ້າງຕັ້ງມະຫາວິທະຍາໄລ ແມ່ນ ລັດຖະບານເປັນຜູ້ຕົກລົງ ຕາມການສະເໜີຂອງກະຊວງສຶກສາທິການ ແລະ ກິລາ.

ສໍາລັບການສ້າງຕັ້ງສະຖານການສຶກສາພາກເອກະຊົນນັ້ນ ຍັງຕ້ອງໃຫ້ປະຕິບັດຕາມກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ກົດໝາຍວ່າດ້ວຍວິສາຫະກິດ, ກົດໝາຍອື່ນ ແລະ ລະບຽບການ ທີ່ກ່ຽວຂ້ອງ.

ກໍານົດເວລາການພິຈາລະນາ ແລະ ມາດຕະຖານ ການສ້າງຕັ້ງສະຖານການສຶກສາ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 34 (ໃໝ່) ການຂະຫຍາຍ, ໂຮມ, ແຍກ ແລະ/ຫຼື ຍົກລະດັບ ສະຖານການສຶກສາ**

ສະຖານການສຶກສາ ທັງພາກລັດ ແລະ ເອກະຊົນ ທີ່ມີຈຸດປະສົງ ຂະຫຍາຍ, ໂຮມ, ແຍກ ແລະ/ຫຼື ຍົກລະດັບການຈັດຕັ້ງພາຍໃນສະຖານການສຶກສາຂອງຕົນ ຕ້ອງປະຕິບັດຕາມເງື່ອນໄຂ ແລະ ປະກອບເອກະສານ ຂໍອະນຸຍາດນໍາຂະແໜງການສຶກສາທິການ ແລະ ກິລາ ຕາມລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 35 (ໃໝ່) ການໂຈະ ສະຖານການສຶກສາ**

ສະຖານການສຶກສາ ຈະຖືກໂຈະ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ມີຄໍາຮ້ອງຂອງສະຖານການສຶກສາ ຫຼື ຕາມການສະເໜີຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ;
2. ເຄື່ອນໄຫວບໍ່ຖືກກັບ ພາລະບົດບາດ, ຈຸດປະສົງ ແລະ ເປົ້າໝາຍ ຂອງສະຖານການສຶກສາ;
3. ບໍ່ປັບປຸງ ຫຼື ບໍ່ພັດທະນາຄຸນນະພາບການສຶກສາ ຕາມການແນະນໍາ ຂອງອົງການຈັດຕັ້ງທີ່ກ່ຽວຂ້ອງ;
4. ມີກໍລະນີອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 36 (ໃໝ່) ການຍຸບເລີກ ສະຖານການສຶກສາ**

ສະຖານການສຶກສາ ຈະຖືກຍຸບເລີກ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ລະເມີດກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ;
2. ບໍ່ ປັບປຸງ ແລະ ແກ້ໄຂຕາມການແຈ້ງໂຈະ;
3. ຖືກຖອນໃບອະນຸຍາດການສ້າງຕັ້ງ;
4. ຖືກສານຕັດສິນໃຫ້ຍຸບເລີກ;
5. ມີຄໍາຮ້ອງຂໍຍຸບເລີກ ດ້ວຍຄວາມສະໝັກໃຈຂອງຕົນ ຫຼື ຕາມການສະເໜີຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ;
6. ມີກໍລະນີອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

## ພາກທີ V
## ຫຼັກສູດ ແລະ ເຕັກໂນໂລຊີ ການສຶກສາ
### ໝວດທີ 1
### ຫຼັກສູດການສຶກສາ

**ມາດຕາ 37 ຫຼັກສູດການສຶກສາ**

ຫຼັກສູດການສຶກສາ ແມ່ນ ເອກະສານ ທີ່ກຳນົດຫຼັກການ, ຈຸດໝາຍຂອງການສຶກສາ, ໂຄງສ້າງເນື້ອໃນວິຊາຕ່າງໆ, ວິທີການຈັດຕັ້ງການຮຽນ ການສອນ ຂອງແຕ່ລະຊັ້ນ, ແຕ່ລະສາຍ, ການວັດຜົນ ແລະ ການປະເມີນຜົນວິຊາຮຽນຕ່າງໆ ເພື່ອຮັບປະກັນໃຫ້ຜູ້ຮຽນມີ ຄວາມຮູ້, ຄວາມສາມາດ, ທັກສະ, ຄວາມສະຫຼາດ ແລະ ຄຸນສົມບັດສົມທຳປະຕິວັດ.

ຫຼັກສູດການສຶກສາ ປະກອບດ້ວຍ ຫຼັກສູດການສຶກສາແຫ່ງຊາດ, ຫຼັກສູດການສຶກສາທ້ອງຖິ່ນ ແລະ ຫຼັກສູດການສຶກສານານາຊາດ.

**ມາດຕາ 38 ເນື້ອໃນຫຼັກສູດການສຶກສາ**

ເນື້ອໃນຫຼັກສູດການສຶກສາແຫ່ງຊາດ ຕ້ອງຮັບປະກັນ ສາມລັກສະນະ ແລະ ຫ້າຫຼັກມູນ ຂອງການສຶກສາ ແລະ ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ.

ເນື້ອໃນຫຼັກສູດການສຶກສາແຫ່ງຊາດ ໃຫ້ເປັນເອກະພາບກັນໃນທົ່ວປະເທດ.

ສຳລັບທ້ອງຖິ່ນ ທີ່ມີຈຸດພິເສດ, ທ່າແຮງ ແລະ ພູມປັນຍາທີ່ໂດດເດັ່ນ ກໍສາມາດກຳນົດເຂົ້າເປັນເນື້ອໃນຫຼັກສູດການສຶກສາທ້ອງຖິ່ນ ຕາມການເຫັນດີ ຂອງກະຊວງສຶກສາທິການ ແລະ ກິລາ.

ສຳລັບຫຼັກສູດການສຶກສານານາຊາດ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 39 ການຮັບຮອງເນື້ອໃນຫຼັກສູດການສຶກສາ**

ເນື້ອໃນຫຼັກສູດການສຶກສາ ໃນໂຮງຮຽນ ແລະ ນອກໂຮງຮຽນ ແຕ່ລະຊັ້ນ, ແຕ່ລະສາຍ ຕ້ອງຮັບປະກັນໃຫ້ມີມາດຕະຖານ ແລະ ປະກາສະນີຍະບັດທຽບເທົ່າກັນ ໂດຍການຮັບຮອງຈາກກະຊວງສຶກສາທິການ ແລະ ກິລາ.

ສຳລັບ ມາດຕະຖານຫຼັກສູດ ແລະ ປະກາສະນີຍະບັດ ລະຫວ່າງປະເທດ ໃຫ້ປະຕິບັດບົນພື້ນຖານການຕົກລົງຮ່ວມກັນຂອງສອງຝ່າຍ ຫຼື ຫຼາຍຝ່າຍ ແຕ່ຕ້ອງສອດຄ່ອງກັບມາດຕະຖານການສຶກສາຂອງບັນດາປະເທດໃນພາກພື້ນ ແລະ ສາກົນ.

**ມາດຕາ 40 (ປັບປຸງ) ການພັດທະນາ ແລະ ການປັບປຸງຫຼັກສູດ**

ການພັດທະນາ ແລະ ການປັບປຸງຫຼັກສູດການສຶກສາ ກ່ອນໄວຮຽນ ແລະ ສາມັນສຶກສາ ໃຫ້ກະຊວງສຶກສາທິການ ແລະ ກິລາ ເປັນຜູ້ຮັບຜິດຊອບ.

ສຳລັບ ການພັດທະນາ ແລະ ການປັບປຸງຫຼັກສູດ ອາຊີວະສຶກສາ ແລະ ການສຶກສາຊັ້ນສູງ ໃຫ້ສະຖານການສຶກສາ ເປັນຜູ້ຮັບຜິດຊອບ ໂດຍມີການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ແລະ ຕ້ອງປະຕິບັດຕາມມາດຕະຖານຫຼັກສູດການສຶກສາແຫ່ງຊາດ ແລະ ສອດຄ່ອງກັບຄວາມຕ້ອງການຂອງຕະຫຼາດແຮງງານ, ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ແລະ ແຜນຍຸດທະສາດການພັດທະນາຊັບພະຍາກອນມະນຸດແຫ່ງຊາດ ໃນແຕ່ລະໄລຍະ ໂດຍການເຫັນດີ ຈາກກະຊວງສຶກສາທິການ ແລະ ກິລາ.

**ມາດຕາ 41 (ປັບປຸງ) ການອະນຸມັດຫຼັກສູດ**

ຫຼັກສູດການສຶກສາ ທຸກຊັ້ນ, ທຸກສາຍ ແລະ ທຸກຮູບແບບ ໃນລະບົບການສຶກສາແຫ່ງຊາດ ໃຫ້ກະຊວງສຶກສາທິການ ແລະ ກິລາ ເປັນຜູ້ອະນຸມັດ ແລະ ປະກາດໃຊ້.

ຫຼັກສູດການສຶກສາທ້ອງຖິ່ນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 38 ຂອງກົດໝາຍສະບັບນີ້ ໃຫ້ພະແນກສຶກສາທິການ ແລະ ກິລາ ແຂວງ, ນະຄອນຫຼວງ ເປັນຜູ້ອະນຸມັດ ພາຍຫຼັງໄດ້ຮັບຄວາມເຫັນດີ ຈາກກະຊວງສຶກສາທິການ ແລະ ກິລາ.

ສຳລັບຫຼັກສູດວິຊາສະເພາະ ຂອງຂະແໜງການ ແມ່ນ ຫຼັກສູດສາຍອາຊີວະສຶກສາ ແລະ ການສຶກສາຊັ້ນສູງ ຊຶ່ງໃຫ້ປະຕິບັດຕາມມາດຕະຖານຫຼັກສູດການສຶກສາແຫ່ງຊາດ ໂດຍຂະແໜງການທີ່ກ່ຽວຂ້ອງ ເປັນຜູ້ຄົ້ນຄວ້າ ສະເໜີໃຫ້ກະຊວງສຶກສາທິການ ແລະ ກິລາ ເປັນຜູ້ອະນຸມັດ.

**ມາດຕາ 42 (ປັບປຸງ) ການກຳນົດເວລາຮຽນ**

ການກຳນົດເວລາຮຽນຂອງການສຶກສາ ທຸກຊັ້ນ ແລະ ທຸກສາຍ ໃນລະບົບການສຶກສາແຫ່ງຊາດ ຕ້ອງໃຫ້ສອດຄ່ອງກັບມາດຕະຖານຫຼັກສູດການສຶກສາແຫ່ງຊາດ ເພື່ອຮັບປະກັນເນື້ອໃນ ແລະ ຄຸນນະພາບຂອງການສຶກສາ.

ການກຳນົດເວລາໃນການຮຽນ ການສອນ ແຕ່ລະຊັ້ນ ແລະ ແຕ່ລະສາຍ ຂອງສະຖານການສຶກສາ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 43 ການສອບເສັງ ແລະ ການອອກປະກາສະນີຍະບັດ**

ກະຊວງສຶກສາທິການ ແລະ ກິລາ ເປັນຜູ້ກຳນົດ ຫຼັກການ, ລະບຽບການ ກ່ຽວກັບການສອບເສັງ, ການອອກປະກາສະນີຍະບັດ ຂອງທຸກຊັ້ນ ແລະ ທຸກສາຍ ທີ່ຂຶ້ນກັບການຄຸ້ມຄອງມະຫາພາກ ຂອງກະຊວງສຶກສາທິການ ແລະ ກິລາ ແລະ ຮັບຮອງການທຽບປະກາສະນີຍະບັດການສຶກສາ ທັງພາຍໃນ ແລະ ຕ່າງປະເທດ.

**ມາດຕາ 44 (ປັບປຸງ) ພາສາທີ່ໃຊ້ໃນການຮຽນ ການສອນ**

ພາສາທີ່ໃຊ້ໃນການຮຽນ ການສອນ ແມ່ນ ພາສາລາວ ແລະ ອັກສອນລາວ ທີ່ນຳໃຊ້ເປັນທາງການຢູ່ສະຖານການສຶກສາ.

ຕົວເລກລາວ ແລະ ຕົວເລກສາກົນ ໃຫ້ນຳໃຊ້ເຂົ້າໃນການຮຽນ ການສອນ ໂດຍເລີ່ມແຕ່ຊັ້ນປະຖົມສຶກສາ ເປັນຕົ້ນໄປ.

**ມາດຕາ 45 ການຮຽນ ການສອນ ພາສາຕ່າງປະເທດ**

ສະຖານການສຶກສາ ສາມາດຈັດຕັ້ງການຮຽນ ການສອນ ພາສາຕ່າງປະເທດ, ໃນນັ້ນ ໃຫ້ເອົາພາສາອັງກິດເປັນວິຊາບັງຄັບ ໂດຍເລີ່ມແຕ່ຊັ້ນປະຖົມສຶກສາ ປີທີສາມ ຂຶ້ນໄປ. ສຳລັບພາສາອື່ນ ໃຫ້ເລືອກຮຽນ, ເລືອກສອນ ຕາມຄວາມເໝາະສົມ ແລະ ຕາມເງື່ອນໄຂຕົວຈິງ ຂອງສະຖານການສຶກສາ.

## ໝວດທີ 2
## ເຕັກໂນໂລຊີການສຶກສາ

**ມາດຕາ 46 (ປັບປຸງ) ເຕັກໂນໂລຊີການສຶກສາ**

ເຕັກໂນໂລຊີການສຶກສາ ແມ່ນ ການນໍາໃຊ້ລະບົບເຄື່ອງມື ແລະ ວິທີການ ທາງດ້ານເຕັກໂນໂລຊີ ແລະ ນະວັດຕະກໍາ ເຂົ້າມາໃຊ້ໃນການຮຽນ ການສອນ, ການຝຶກອົບຮົມ, ການຄົ້ນຄວ້າວິໄຈ ແລະ ຄຸ້ມຄອງບໍລິຫານ ການສຶກສາ.

**ມາດຕາ 47 (ປັບປຸງ) ການຜະລິດ, ການສະໜອງ, ການພັດທະນາ ແລະ ນໍາໃຊ້ເຕັກໂນໂລຊີ ການສຶກສາ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງເຄື່ອນໄຫວວຽກງານສຶກສາ ໄດ້ຮັບການສົ່ງເສີມການ ຜະລິດ, ການສະໜອງ, ການພັດທະນາ, ນໍາໃຊ້ເຕັກໂນໂລຊີ ແລະ ນະວັດຕະກໍາ ການສຶກສາ ເຊັ່ນ ຫ້ອງສະໝຸດ, ຫ້ອງທົດລອງ, ຫ້ອງວິເຄາະ, ຫໍພິພິທະພັນ, ຫ້ອງຟ້າຈໍາລອງ, ສວນສັດ, ສວນສາທາລະນະ, ສວນພຶກສາສາດ, ສວນວິທະຍາສາດ, ສູນເຕັກໂນໂລຊີ, ແຫຼ່ງ ຂໍ້ມູນ ຂ່າວສານ ແລະ ອື່ນໆ ໃຫ້ພຽງພໍກັບ ຄວາມຕ້ອງການ ທີ່ຈໍາເປັນ.

## ພາກທີ VI
## ຜູ້ຮຽນ

**ມາດຕາ 48 (ປັບປຸງ) ຜູ້ຮຽນ**

ຜູ້ຮຽນ ແມ່ນ ຜູ້ກໍາລັງສຶກສາຮຽນຮູ້ ຫຼື ຄົ້ນຄວ້າ ຢູ່ ທຸກຊັ້ນ, ທຸກຂັ້ນ ໃນໂຮງຮຽນ ແລະ ນອກໂຮງຮຽນ ຂອງລະບົບການສຶກສາແຫ່ງຊາດ.

ຜູ້ຮຽນ ມີ ສາມປະເພດ ດັ່ງນີ້:

1. ນັກຮຽນ ຊຶ່ງແມ່ນ ຜູ້ຮຽນ ໃນຊັ້ນ ການສຶກສາກ່ອນໄວຮຽນ, ສາມັນສຶກສາ, ອາຊີວະສຶກສາຊັ້ນຕົ້ນ, ອາຊີວະສຶກສາຊັ້ນກາງ;
2. ນັກສຶກສາ ຊຶ່ງແມ່ນ ຜູ້ຮຽນ ໃນອາຊີວະສຶກສາຊັ້ນສູງ, ຊັ້ນປະລິນຍາຕີ, ຊັ້ນປະລິນຍາໂທ ແລະ ຊັ້ນປະລິນຍາເອກ;
3. ນັກຄົ້ນຄວ້າ ຊຶ່ງແມ່ນ ຜູ້ເຮັດການວິໄຈ, ການຄົ້ນຄວ້າໃນຫົວຂໍ້ໃດໜຶ່ງ ເພື່ອຊອກຫາຄວາມເປັນຈິງ ທາງດ້ານວິທະຍາສາດ ທໍາມະຊາດ ແລະ ສັງຄົມ.

**ມາດຕາ 49 (ປັບປຸງ) ການອຸດໜູນຜູ້ຮຽນ**

ຜູ້ຮຽນທີ່ມາຈາກຄອບຄົວທຸກຍາກ, ຜູ້ດ້ອຍໂອກາດ, ຜູ້ພິການ, ຜູ້ມີພອນສະຫວັນ ຫຼື ຜູ້ຮຽນເກັ່ງ ໂດຍສະເພາະເພດຍິງ ແລະ ເຜົ່າ ໄດ້ຮັບການອຸດໜູນ ຕາມລະບຽບການ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ແລະ ສັງຄົມ ທັງພາຍໃນ ແລະ ຕ່າງປະເທດ ມີສ່ວນຮ່ວມໃນ ການຊ່ວຍເຫຼືອຜູ້ຮຽນດັ່ງກ່າວ ດ້ວຍຮູບການທີ່ເໝາະສົມ ແລະ ສ້າງເງື່ອນໄຂ ໃຫ້ຜູ້ພິການໄດ້ເຂົ້າຮຽນຮ່ວມ ກັບຜູ້ຮຽນປົກກະຕິ.

ມາດຕາ 50 (ປັບປຸງ) ການສຶກສາສຳລັບຜູ້ມີບັນຫາ

ຜູ້ມີບັນຫາ ແມ່ນ ຜູ້ຖືກກັກຂັງ, ດັດສ້າງ ແລະ ບຳບັດ.

ລັດ ມີໜ້າທີ່ ຈັດຕັ້ງ ແລະ ສ້າງເງື່ອນໄຂ ແກ່ຜູ້ມີບັນຫາ ໃຫ້ໄດ້ຮັບການສຶກສາ ແລະ ອົບຮົມດ້ານວິຊາຊີບ ຕາມຄວາມເໝາະສົມ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ມາດຕາ 51 (ປັບປຸງ) ສິດຂອງຜູ້ຮຽນ

ຜູ້ຮຽນ ມີສິດ ດັ່ງນີ້:

1. ໄດ້ຮັບຄວາມສະເໝີພາບໃນການສຶກສາ ຮຽນຮູ້, ຄົ້ນຄວ້າ ແລະ ສະແຫວງຫາຄວາມກ້າວໜ້າ;
2. ໄດ້ຮັບທຶນການສຶກສາ, ການຍ້ອງຍໍ ແລະ ນະໂຍບາຍອື່ນ ຕາມລະບຽບການ ລວມທັງການເຂົ້າເຖິງແຫຼ່ງທຶນສຳລັບການສຶກສາ;
3. ໄດ້ຮັບການສົ່ງເສີມສຸຂະພາບ ແລະ ປິ່ນປົວຂັ້ນພື້ນຖານ ໂດຍບໍ່ເສຍຄ່າ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການ;
4. ໄດ້ຮັບໃບຢັ້ງຢືນການສຶກສາ ແລະ ປະກາສະນີຍະບັດ ເມື່ອສຳເລັດການສຶກສາ;
5. ເຂົ້າເປັນສະມາຊິກອົງການຈັດຕັ້ງມະຫາຊົນ ຕາມລະບຽບການ;
6. ສະເໜີຄຳເຫັນ ຕໍ່ຄູ, ການຈັດຕັ້ງທີ່ກ່ຽວຂ້ອງ ກ່ຽວກັບຜົນການຮຽນ ແລະ ການປະພຶດ ພ້ອມທັງມີສ່ວນຮ່ວມໃນການພັດທະນາສະຖານການສຶກສາ;
7. ໄດ້ຮັບ ຂໍ້ມູນ ຂ່າວສານ, ເຂົ້າໃຊ້ບໍລິການຫ້ອງສະໝຸດ ແລະ ຫໍພິພິທະພັນ ໂດຍບໍ່ເສຍຄ່າ;
8. ໄດ້ຮັບການຫຼຸດຜ່ອນຄ່າເດີນທາງ ດ້ວຍພາຫະນະຕ່າງໆ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການ;
9. ໄດ້ຮັບສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ມາດຕາ 52 (ໃໝ່) ພັນທະຂອງຜູ້ຮຽນ

ຜູ້ຮຽນ ມີພັນທະ ດັ່ງນີ້:

1. ເຄົາລົບ ແລະ ປະຕິບັດຕາມ ກົດໝາຍ, ລະບຽບການ ກ່ຽວກັບການສຶກສາ ແລະ ກົດລະບຽບຂອງສະຖານການສຶກສາທີ່ກ່ຽວຂ້ອງ ຢ່າງເຂັ້ມງວດ;
2. ເຄົາລົບ, ປະຕິບັດ ຄຳສັ່ງສອນ ຂອງ ຄູ, ພໍ່ແມ່ ຫຼື ຜູ້ປົກຄອງ ແລະ ຜູ້ນຳ;
3. ພັດທະນາຕົນເອງ ໃຫ້ມີຄວາມຮູ້, ຄວາມສາມາດ, ມີຄຸນສົມບັດສິນທຳປະຕິວັດ, ເອົາໃຈໃສ່ການຮຽນ ແລະ ຮຽນໃຫ້ສຳເລັດ ລວມທັງການຊອກຮູ້ ແລະ ເຂົ້າເຖິງແຫຼ່ງ ຂໍ້ມູນ ຂ່າວສານ ທີ່ກ່ຽວຂ້ອງ;
4. ເຂົ້າຮ່ວມ ແລະ ເຄື່ອນໄຫວກິດຈະກຳຕ່າງໆຂອງສະຖານການສຶກສາ ລວມທັງກິດຈະກຳສາທາລະນະປະໂຫຍດ;
5. ປົກປັກຮັກສາ ສະຖານການສຶກສາ ແລະ ອຸປະກອນການສຶກສາ, ສື່ການຮຽນ ແລະ ແຫຼ່ງຄວາມຮູ້ອື່ນ ລວມທັງເຕັກໂນໂລຊີ ແລະ ນະວັດຕະກຳ ການສຶກສາ;
6. ສາມັກຄີ, ຊ່ວຍເຫຼືອ ຊຶ່ງກັນ ແລະ ກັນ ໃນການສຶກສາຮຽນຮູ້;
7. ຕ້ານ ແລະ ສະກັດກັ້ນປາກົດການຫຍໍ້ທໍ້ ໃນສະຖານການສຶກສາ ແລະ ສັງຄົມ;
8. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

# ພາກທີ VII
# ຄູ ແລະ ບຸກຄະລາກອນການສຶກສາ
## ໝວດທີ 1
## ຄູ

**ມາດຕາ 53 ຄູ**

ຄູ ແມ່ນ ຜູ້ປະຕິບັດໜ້າທີ່ສິດສອນ, ຖ່າຍທອດຄວາມຮູ້, ສຶກສາອົບຮົມ, ຄົ້ນຄວ້າວິໄຈ, ຊຸກຍູ້, ສົ່ງເສີມ ແລະ ຊ່ວຍເຫຼືອຜູ້ຮຽນດ້ວຍຫຼາຍຮູບການ.

ສໍາລັບ ການຄຸ້ມຄອງລັດຖະກອນຄູ ແລະ ຄູສອນ ໃນສະຖານການສຶກສາ ຂອງກໍາລັງປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ແລະ ພາກເອກະຊົນ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 54 (ປັບປຸງ) ມາດຕະຖານຂອງຄູ**

ຄູ ຕ້ອງມີມາດຕະຖານ ດັ່ງນີ້:

1. ມີ ຫຼັກໝັ້ນ, ທັດສະນະການເມືອງຖືກຕ້ອງ, ຮັກ ແລະ ປົກປ້ອງລະບອບປະຊາທິປະໄຕ ປະຊາຊົນ;
2. ມີ ຈັນຍາບັນຂອງຄູ ແລະ ຄຸນສົມບັດສົມທໍາປະຕິວັດ;
3. ມີ ຄວາມຮູ້, ຄວາມສາມາດ, ວິຊາສະເພາະ ໃນການສອນຢູ່ແຕ່ລະຊັ້ນຮຽນ;
4. ມີ ປະກາສະນີຍະບັດ ຫຼື ໃບຢັ້ງຢືນ ວິຊາຊີບຄູ ແລະ/ຫຼື ໃບອະນຸຍາດການສອນ;
5. ມີ ຄວາມດຸໝັ່ນ ຊອກຮຽນຮູ້ ແລະ ພັດທະນາຕົນເອງ ຢູ່ເລື້ອຍໆ;
6. ມີສຸຂະພາບດີ.

**ມາດຕາ 55 ນາມມະຍົດ ແລະ ຕໍາແໜ່ງວິຊາການຄູ**

ຄູທີ່ໄດ້ສິດສອນໃນສະຖານການສຶກສາ ມີ ນາມມະຍົດ ແລະ ຕໍາແໜ່ງວິຊາການຄູ ດັ່ງນີ້:

1. ນາມມະຍົດ: ຄູແຫ່ງຊາດ ແລະ ຄູປະຊາຊົນ;
2. ຕໍາແໜ່ງວິຊາການຄູ: ຄູປະສົບການ, ຄູຊໍານານການ, ຄູຊ່ຽວຊານ, ຄູຊ່ຽວຊານອາວຸໂສ, ຜູ້ຊ່ວຍອາຈານ, ອາຈານ, ຮອງສາດສະດາຈານ, ສາດສະດາຈານ.

ໃນກໍລະນີຈໍາເປັນ ນາມມະຍົດ ແລະ ຕໍາແໜ່ງວິຊາການຄູ ອາດມີການເພີ່ມເຕີມ ຫຼື ການປ່ຽນແປງ ຕາມການຕົກລົງຂອງລັດຖະບານ.

**ມາດຕາ 56 (ປັບປຸງ) ສິດຂອງຄູ**

ຄູ ມີສິດ ດັ່ງນີ້:

1. ໄດ້ຮັບການ ບໍາລຸງ, ຍົກລະດັບຄວາມຮູ້ ທາງດ້ານວິຊາສະເພາະທີ່ຕົນສອນ ແລະ ສິ່ງທີ່ກ່ຽວຂ້ອງກັບການສອນໃຫ້ສູງຂຶ້ນ;
2. ສະເໜີຄໍາເຫັນ ແລະ ລາຍງານຜົນການເຄື່ອນໄຫວຂອງຕົນ ໃຫ້ຜູ້ບໍລິຫານທີ່ຕົນຂຶ້ນກັບ;
3. ໄດ້ຮັບການປົກປ້ອງສິດ, ຜົນປະໂຫຍດ ແລະ ກຽດສັກສີຂອງຕົນ;
4. ສະເໜີຂໍ ນາມມະຍົດ ແລະ ຕໍາແໜ່ງວິຊາການຄູ;
5. ນໍາໃຊ້ສິດອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 57 (ປັບປຸງ) ໜ້າທີ່ຂອງຄູ**

ຄູ ມີໜ້າທີ່ ດັ່ງນີ້:

1. ແຕ່ງ, ປັບປຸງ, ຮຽບຮຽງ ບົດສອນ ແລະ ປື້ມຕໍາລາ, ກຽມອຸປະກອນ ແລະ ສື່ການຮຽນ ການສອນ, ຄົ້ນຄວ້າວິໄຈ ແລະ ບໍລິການ ທາງດ້ານວິຊາການແກ່ສັງຄົມ ຕາມລະບຽບການ;

2. ສອນຕາມຫຼັກສູດ, ຕາມວິຊາສະເພາະ ແລະ ຕາມຄວາມຊໍານານ;

3. ຕິດຕາມ, ກວດກາ, ວັດຜົນ, ປະເມີນຜົນ ແລະ ໃຫ້ຄໍາແນະນໍາແກ່ ຜູ້ຮຽນຢ່າງຕໍ່ເນື່ອງ ແລະ ເປັນທໍາ;

4. ບໍາລຸງຜູ້ຮຽນອ່ອນ, ສົ່ງເສີມຜູ້ຮຽນເກັ່ງ ແລະ ຜູ້ມີພອນສະຫວັນ;

5. ເຂົ້າຮ່ວມ ແລະ ເຄື່ອນໄຫວກິດຈະກໍາ ຂອງສະຖານການສຶກສາ ແລະ ສັງຄົມ;

6. ປະສານສົມທົບກັບ ພໍ່, ແມ່, ຜູ້ປົກຄອງ, ຄະນະພັດທະນາການສຶກສາ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນການປະຕິບັດໜ້າທີ່;

7. ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍຂອງການຈັດຕັ້ງ ຢ່າງເຂັ້ມງວດ.

**ມາດຕາ 58 (ໃໝ່) ພັນທະຂອງຄູ**

ຄູ ມີພັນທະ ດັ່ງນີ້:

1. ເຄົາລົບ ແລະ ປະຕິບັດຕາມ ລັດຖະທໍາມະນູນ, ກົດໝາຍ, ແຜນຍຸດທະສາດການພັດທະນາຊັບພະຍາກອນມະນຸດ ແຫ່ງຊາດ, ລະບຽບການ ກ່ຽວກັບການສຶກສາ ແລະ ສະຖານການສຶກສາທີ່ກ່ຽວຂ້ອງ ຢ່າງເຂັ້ມງວດ;

2. ເປັນແບບຢ່າງທີ່ດີ, ຮັກສາກຽດ ແລະ ສັກສີ ຂອງຄວາມເປັນຄູ;

3. ປະຕິບັດຕໍ່ຜູ້ຮຽນ ຢ່າງເປັນທໍາ, ນັບຖື, ຮັກແພງ ແລະ ປົກປ້ອງສິດ, ຜົນປະໂຫຍດອັນຊອບທໍາ ຂອງຜູ້ຮຽນ;

4. ພັດທະນາວິຊາຊີບຄູແບບຕໍ່ເນື່ອງໃຫ້ມີ ຄວາມຮູ້, ຄວາມສາມາດ, ຄຸນສົມບັດສິນທໍາປະຕິວັດ ແລະ ເອົາໃຈໃສ່ໃນການສິດສອນ;

5. ສຶກສາອົບຮົມ, ປູກຈິດສໍານຶກໃຫ້ຜູ້ຮຽນ ຮູ້ບຸນຄຸນ ຄູ, ພໍ່, ແມ່, ຜູ້ປົກຄອງ, ຜູ້ນໍາ ແລະ ຜູ້ອຸປະການະຄຸນ ລວມທັງການຮູ້ຮັກຊາດ, ວັດທະນະທໍາ ແລະ ຮີດຄອງປະເພນີອັນດີງາມຂອງ ຊາດ, ທ້ອງຖິ່ນ;

6. ນໍາໃຊ້ ແລະ ປົກປັກຮັກສາ ອາຄານ, ສະຖານທີ່, ວັດຖຸປະກອນ ແລະ ສື່ການຮຽນ ການສອນ;

7. ປົກປັກຮັກສາຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ ແລະ ຄວາມສະອາດສວຍງາມ ຂອງສະຖານການສຶກສາ;

8. ປະຕິບັດພັນທະອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 59 (ໃໝ່) ຈັນຍາບັນຂອງຄູ**

ຈັນຍາບັນຂອງຄູ ແມ່ນ ກິດການປະພຶດຂອງຄູ ທີ່ຄູແຕ່ລະຄົນ ຕ້ອງເຄົາລົບ ແລະ ປະຕິບັດ ຢ່າງເຂັ້ມງວດ ດ້ວຍຄວາມສັດຊື່ບໍລິສຸດ, ຮັກອາຊີບ, ຮັກແພງຜູ້ຮຽນ, ເປັນແບບຢ່າງນໍາໜ້າ ແລະ ພັດທະນາຕົນເອງ ໂດຍມີຈັນຍາບັນ ຕໍ່ ຕົນເອງ, ວິຊາຊີບ, ການຈັດຕັ້ງ, ປະຊາຊົນ ແລະ ສັງຄົມ.

ສໍາລັບເນື້ອໃນລະອຽດ ກ່ຽວກັບຈັນຍາບັນຂອງຄູ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 60 ນະໂຍບາຍຕໍ່ຄູ**

ໃນການປະຕິບັດໜ້າທີ່ ຄູ ໄດ້ຮັບຄ່າຕອບແທນແຮງງານ, ຍົກລະດັບວິຊາສະເພາະ, ວິຊາການ, ຊີວິດການເປັນຢູ່ ແລະ ສະຖານະທາງສັງຄົມ, ໄດ້ຮັບການພັກຜ່ອນ, ຮັບບໍານານ ແລະ ນະໂຍບາຍອື່ນ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ແລະ ສັງຄົມ ທັງພາກລັດ ແລະ ເອກະຊົນ ພາຍໃນ ແລະ ຕ່າງປະເທດ ມີສ່ວນຮ່ວມໃນການຊ່ວຍເຫຼືອ ແລະ ອໍານວຍຄວາມສະດວກ ໃຫ້ແກ່ການປະຕິບັດໜ້າທີ່ຂອງຄູ.

**ມາດຕາ 61 ການສ້າງ ແລະ ການພັດທະນາ ຄູ**

ການສ້າງ ແລະ ການພັດທະນາ ຄູ ຕ້ອງຮັບປະກັນທາງດ້ານ ປະລິມານ ແລະ ຄຸນນະພາບ ຕາມມາດຕະຖານການສຶກສາ ແນໃສ່ປູກຈິດສໍານຶກ ແລະ ສະຕິຊາດ.

ສະຖານການສຶກສາ, ການຈັດຕັ້ງ, ສັງຄົມ, ຊຸມຊົນ ແລະ ພາກສ່ວນທີ່ກ່ຽວຂ້ອງ ສ້າງເງື່ອນໄຂໃຫ້ຄູ ໄດ້ຮັບການບໍາລຸງ ແລະ ຍົກລະດັບທາງດ້ານວິຊາສະເພາະ ຢ່າງຕໍ່ເນື່ອງ.

## ໝວດທີ 2
## ບຸກຄະລາກອນການສຶກສາ

**ມາດຕາ 62 (ປັບປຸງ) ບຸກຄະລາກອນການສຶກສາ**

ບຸກຄະລາກອນການສຶກສາ ແມ່ນ ຜູ້ສັງກັດຢູ່ ສໍານັກງານ, ອົງການ ແລະ ສະຖານການສຶກສາ ທັງພາກລັດ ແລະ ເອກຊົນ ທີ່ເຮັດໜ້າທີ່ຄຸ້ມຄອງ, ບໍລິຫານ, ກວດກາ, ແນະນໍາ, ຊ່ວຍເຫຼືອ ແລະ ອໍານວຍຄວາມສະດວກ ໃຫ້ແກ່ການຮຽນ ການສອນ.

ມາດຕະຖານຂອງບຸກຄະລາກອນການສຶກສາ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ, ກົດໝາຍອື່ນ ແລະ ລະບຽບການ ທີ່ກ່ຽວຂ້ອງ.

**ມາດຕາ 63 (ປັບປຸງ) ສິດ ແລະ ໜ້າທີ່ ຂອງບຸກຄະລາກອນການສຶກສາ**

ບຸກຄະລາກອນການສຶກສາ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ປະຕິບັດ ຕາມຂອບເຂດສິດ ແລະ ໜ້າທີ່ ທີ່ການຈັດຕັ້ງມອບໝາຍໃຫ້ ແລະ ລາຍງານ ຕໍ່ສະຖານການສຶກສາ ທີ່ຕົນສັງກັດ;
2. ໄດ້ຮັບການບໍາລຸງ, ຍົກລະດັບ ຄວາມຮູ້ທາງດ້ານວິຊາສະເພາະ ແລະ ວຽກງານອື່ນ ທີ່ຕົນຮັບຜິດຊອບ;
3. ປະກອບຄໍາເຫັນ ກ່ຽວກັບການພັດທະນາວຽກງານສຶກສາ;
4. ອໍານວຍຄວາມສະດວກ ແລະ ໃຫ້ການບໍລິການ ຕາມກົດໝາຍ;
5. ປະສານສົມທົບກັບ ພໍ່, ແມ່, ຜູ້ປົກຄອງ, ຄະນະພັດທະນາການສຶກສາ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນການປະຕິບັດໜ້າທີ່;
6. ເຂົ້າຮ່ວມ ແລະ ເຄື່ອນໄຫວກິດຈະກໍາ ຂອງການຈັດຕັ້ງ ແລະ ສັງຄົມ;
7. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 64 (ໃໝ່) ພັນທະຂອງບຸກຄະລາກອນການສຶກສາ**

ບຸກຄະລາກອນການສຶກສາ ມີພັນທະ ດັ່ງນີ້:

1. ເຄົາລົບ ແລະ ປະຕິບັດຕາມ ລັດຖະທຳມະນູນ, ກົດໝາຍ, ແຜນຍຸດທະສາດການພັດທະນາຊັບພະຍາກອນມະນຸດ ແຫ່ງຊາດ ແລະ ລະບຽບການ ກ່ຽວກັບການສຶກສາ ຢ່າງເຂັ້ມງວດ;
2. ຮັກສາຄວາມລັບທາງລັດຖະການ ແລະ ປົກປ້ອງຜົນປະໂຫຍດສ່ວນລວມ;
3. ປົກປັກຮັກສາຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍ ຂອງສະຖານການສຶກສາ;
4. ເປັນແບບຢ່າງທີ່ດີ, ຮັກສາກຽດ ແລະ ສັກສີ ຂອງບຸກຄະລາກອນການສຶກສາ;
5. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 65 (ປັບປຸງ) ນະໂຍບາຍຕໍ່ບຸກຄະລາກອນການສຶກສາ**

ບຸກຄະລາກອນການສຶກສາ ໄດ້ຮັບຄ່າຕອບແທນແຮງງານ ແລະ ນະໂຍບາຍອື່ນ ໃນການປະຕິບັດໜ້າທີ່, ຍົກລະດັບ ວິຊາສະເພາະ, ວິຊາການ, ຊີວິດການເປັນຢູ່, ສະຖານະທາງສັງຄົມ, ໄດ້ຮັບການພັກຜ່ອນ ແລະ ຮັບບຳນານ ຕາມກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

**ມາດຕາ 66 ການສ້າງ ແລະ ການພັດທະນາບຸກຄະລາກອນການສຶກສາ**

ຂະແໜງການສຶກສາທິການ ແລະ ກິລາ ແລະ ຂະແໜງການອື່ນ ສົ່ງເສີມ ແລະ ສ້າງເງື່ອນໄຂ ໃຫ້ບຸກຄະລາກອນການສຶກສາ ຂອງສະຖານການສຶກສາ ທັງພາກລັດ ແລະ ເອກະຊົນ ໄດ້ຮັບການຝຶກອົບຮົມ, ຍົກລະດັບທາງດ້ານວິຊາສະເພາະ ແລະ ໄດ້ຮັບການພັດທະນາ ຢ່າງຮອບດ້ານ ເພື່ອສ້າງເປັນຜູ້ສືບທອດ ແລະ ຕອບສະໜອງຄວາມຕ້ອງການຂອງວຽກງານສຶກສາ ໃນແຕ່ລະໄລຍະ.

## ພາກທີ VIII
## ການປະກັນຄຸນນະພາບການສຶກສາ ແລະ ຂອບວຸດທິການສຶກສາແຫ່ງຊາດ
### ໝວດທີ 1
### ການປະກັນຄຸນນະພາບການສຶກສາ

**ມາດຕາ 67 ການປະກັນຄຸນນະພາບການສຶກສາ**

ການປະກັນຄຸນນະພາບການສຶກສາ ແມ່ນ ການກຳນົດມາດຕະຖານ, ການຕິດຕາມ, ປະເມີນຜົນ ແລະ ກວດສອບຄຸນນະພາບການສຶກສາ ທັງພາກລັດ ແລະ ເອກະຊົນ ດ້ວຍກົນໄກການປະກັນຄຸນນະພາບການສຶກສາພາຍໃນ ແລະ ພາຍນອກ ເພື່ອຮັບຮອງ ແລະ ຢັ້ງຢືນຜົນການສຶກສາ, ສ້າງຄວາມເຊື່ອໝັ້ນຕໍ່ສັງຄົມ, ຊຸມຊົນ ແລະ ຜູ້ປົກຄອງ, ດຶງດູດຄວາມສົນໃຈຕໍ່ການຮຽນ ເຮັດໃຫ້ຜົນການສຶກສາ ມີມາດຕະຖານທຽບເທົ່າມາດຕະຖານພາກພື້ນ ແລະ ສາກົນ.

**ມາດຕາ 68 (ໃໝ່) ຫຼັກການ ການປະກັນຄຸນນະພາບການສຶກສາ**

ການປະກັນຄຸນນະພາບການສຶກສາ ໃຫ້ດຳເນີນຕາມຫຼັກການ ດັ່ງນີ້:

1. ຖືເອົາຄຸນນະພາບ ຂອງຜູ້ຮຽນ ເປັນບຸລິມະສິດ;
2. ຮັບປະກັນລັກສະນະ ພາວະວິໄສ, ຊັດເຈນ ແລະ ຖືເອົາຂໍ້ມູນເປັນບ່ອນອີງພື້ນຖານຂອງທຸກວຽກງານ;

3. ມີຄວາມຍຸຕິທຳ, ໂປ່ງໃສ ແລະ ກວດສອບໄດ້;

4. ຖືເປັນວຽກງານພາກບັງຄັບ, ເຄື່ອນໄຫວ ຢ່າງປົກກະຕິ, ຕໍ່ເນື່ອງ ແລະ ເປັນຮອບວຽນ ເພື່ອກ້າວເຂົ້າສູ່ຄຸນນະພາບດີຂຶ້ນ;

5. ຮັບປະກັນໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງ ໄດ້ມີສ່ວນຮ່ວມໃນຂະບວນການປະກັນຄຸນນະພາບການສຶກສາ;

6. ຮັບປະກັນຄຸນນະພາບຂອງຄູ, ຫຼັກສູດ, ໂຄງລ່າງພື້ນຖານ ແລະ ສິ່ງອຳນວຍຄວາມສະດວກ.

**ມາດຕາ 69 (ປັບປຸງ) ກົນໄກການປະກັນຄຸນນະພາບການສຶກສາ**

ກົນໄກການປະກັນຄຸນນະພາບການສຶກສາ ປະກອບດ້ວຍ ການປະກັນຄຸນນະພາບການສຶກສາ ພາຍໃນ ແລະ ພາຍນອກ ດັ່ງນີ້:

1. ການປະກັນຄຸນນະພາບການສຶກສາພາຍໃນ ແມ່ນ ການຕິດຕາມ ແລະ ປະເມີນຜົນຄຸນນະພາບການສຶກສາ ຕາມມາດຕະຖານຄຸນນະພາບການສຶກສາຂອງກະຊວງສຶກສາທິການ ແລະ ກິລາ ໂດຍແມ່ນສະຖານການສຶກສາ ເປັນຜູ້ປະເມີນ;

2. ການປະກັນຄຸນນະພາບການສຶກສາພາຍນອກ ແມ່ນ ການຕິດຕາມ, ປະເມີນຜົນ ແລະ ກວດສອບຄຸນນະພາບການສຶກສາ ຕາມມາດຕະຖານຄຸນນະພາບການສຶກສາ ຂອງກະຊວງສຶກສາທິການ ແລະ ກິລາ ຫຼື ສາກົນ ໂດຍແມ່ນການຈັດຕັ້ງ ທີ່ຢູ່ນອກ ຫຼື ບໍ່ຂຶ້ນກັບສະຖານການສຶກສານັ້ນ ເປັນຜູ້ປະເມີນ.

ວິທີການປະເມີນການປະກັນຄຸນນະພາບການສຶກສາ ພາຍໃນ ແລະ ພາຍນອກ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ໝວດທີ 2
## ຂອບວຸດທິການສຶກສາແຫ່ງຊາດ

**ມາດຕາ 70 (ປັບປຸງ) ຂອບວຸດທິການສຶກສາແຫ່ງຊາດ**

ຂອບວຸດທິການສຶກສາແຫ່ງຊາດ ແມ່ນ ການກຳນົດວຸດທິການສຶກສາແຕ່ລະລະດັບ ໂດຍກຳນົດຂີດເຂດຄວາມຮູ້, ຄວາມຊຳນານງານ ແລະ ປະສົບການຂອງຜູ້ຮຽນ ແຕ່ລະລະດັບ ໂດຍມີຈຸດປະສົງ ດັ່ງນີ້:

1. ສະໜັບສະໜູນການຮຽນຮູ້ຕະຫຼອດຊີວິດ;

2. ສະໜັບສະໜູນການຮຽນຕໍ່ ລະຫວ່າງ ຊັ້ນ ແລະ ສາຍ ບົນພື້ນຖານເງື່ອນໄຂການເຂົ້າຮຽນ, ການປະເມີນຜົນການຮຽນຂອງນັກສຶກສາ ໂດຍມີເກນມາດຕະຖານຮັບຮອງ ແລະ ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ;

3. ສ້າງຄວາມໂປ່ງໃສ ໃນການຮັບຮູ້ວຸດທິ ຂອງຜູ້ຖືປະກາສະນີຍະບັດ, ທຽບ ແລະ ຢັ້ງຢືນປະສົບການ ແລະ ການຮຽນຮູ້ທີ່ມີມາກ່ອນ;

4. ສົ່ງເສີມຄວາມເຊື່ອໝັ້ນ ໃນລະບົບການສຶກສາແຫ່ງຊາດ ແລະ ວຸດທິການສຶກສາທີ່ໄດ້ຮັບເພື່ອເປັນພື້ນຖານໃນການສົມທຽບຜົນການຮຽນ ແລະ ເປັນບ່ອນອີງໃນການສຶກສາຕໍ່ ພາຍໃນ ແລະ ຕ່າງປະເທດ.

**ມາດຕາ 71 (ປັບປຸງ) ການກຳນົດຂອບວຸດທິການສຶກສາແຫ່ງຊາດ**

ກະຊວງສຶກສາທິການ ແລະ ກິລາ ປະສານສົມທົບກັບ ກະຊວງ, ອົງການອື່ນ ທີ່ກ່ຽວຂ້ອງ ກຳນົດຫຼັກການ, ວິທີການ ແລະ ເນື້ອໃນ ຂອງຂອບວຸດທິການສຶກສາແຫ່ງຊາດ ເພື່ອນຳສະເໜີ ລັດຖະບານພິຈາລະນາ.

# ພາກທີ IX
# ການລົງທຶນໃສ່ການສຶກສາ
## ໝວດທີ 1
## ການລົງທຶນຂອງລັດ

**ມາດຕາ 72 (ປັບປຸງ) ການລົງທຶນຂອງລັດ**

ການລົງທຶນຂອງລັດ ແມ່ນ ການສະໜອງງົບປະມານໃຫ້ແກ່ການພັດທະນາຊັບພະຍາກອນມະນຸດ, ການກໍ່ສ້າງໂຄງລ່າງພື້ນຖານ, ສະໜອງ ພາຫະນະ, ວັດຖຸປະກອນ, ສື່ການຮຽນ ການສອນ, ສິ່ງອໍານວຍຄວາມສະດວກຕ່າງໆ ໃນການພັດທະນາວຽກງານສຶກສາ ລວມທັງວຽກງານສົ່ງເສີມ ການອະນາໄມ, ສຸຂະພາບ ແລະ ໂພຊະນາການ.

**ມາດຕາ 73 (ປັບປຸງ) ແຫຼ່ງທຶນການສຶກສາ**

ທຶນການສຶກສາ ໄດ້ມາຈາກ:

1. ງົບປະມານຂອງລັດ;
2. ກອງທຶນສົ່ງເສີມການສຶກສາ;
3. ການຊ່ວຍເຫຼືອຂອງ ຊຸມຊົນ, ບຸກຄົນ, ນິຕິບຸກຄົນ, ຄອບຄົວ ແລະ ອົງການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ;
4. ແຫຼ່ງທຶນອື່ນ ທີ່ຖືກຕ້ອງຕາມກົດໝາຍ.

**ມາດຕາ 74 (ປັບປຸງ) ງົບປະມານຂອງຂະແໜງການສຶກສາທິການ ແລະ ກິລາ**

ລັດ ຈັດບຸລິມະສິດ ແລະ ເພີ່ມອັດຕາສ່ວນລາຍຈ່າຍງົບປະມານແຫ່ງລັດປະຈໍາປີ ໃຫ້ແກ່ຂະແໜງການສຶກສາທິການ ແລະ ກິລາ ບໍ່ໃຫ້ຫຼຸດ ສິບແປດສ່ວນຮ້ອຍ. ການສະໜອງງົບປະມານ ສໍາລັບການບໍລິຫານປົກກະຕິ ໃຫ້ແກ່ສະຖານການສຶກສາຂອງລັດ ໃຫ້ຄິດໄລ່ຕາມມູນຄ່າຫົວໜ່ວຍ. ລັດຖະບານ ແລະ ອົງການປົກຄອງທ້ອງຖິ່ນ ມີຄວາມຮັບຜິດຊອບໃນການຈັດແບ່ງງົບປະມານດັ່ງກ່າວ ຢ່າງເຂັ້ມງວດ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 75 (ປັບປຸງ) ຄ່າທໍານຽມ ແລະ ຄ່າບໍລິການ ຢູ່ສະຖານການສຶກສາຂອງລັດ**

ຄ່າທໍານຽມ ແລະ ຄ່າບໍລິການ ຢູ່ສະຖານການສຶກສາຂອງລັດ ໃຫ້ປະຕິບັດຕາມລະບຽບການ ກ່ຽວກັບຄ່າທໍານຽມ ແລະ ຄ່າບໍລິການ ທີ່ປະກາດໃຊ້ ໃນແຕ່ລະໄລຍະ, ຍົກເວັ້ນການສຶກສາພາກບັງຄັບ.

## ໝວດທີ 2
## ການລົງທຶນຂອງເອກະຊົນ

**ມາດຕາ 76 (ປັບປຸງ) ການລົງທຶນຂອງເອກະຊົນ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ລົງທຶນ ເຂົ້າໃນການສຶກສາ ໄດ້ຮັບການສົ່ງເສີມໃນການສ້າງຕັ້ງສະຖານການສຶກສາລະດັບຕ່າງໆ, ເປີດການຮຽນ ການສອນ

ຕາມລະບົບການສຶກສາແຫ່ງຊາດ ແລະ ຕາມຫຼັກສູດທີ່ກະຊວງສຶກສາທິການ ແລະ ກິລາ ອະນຸມັດ ເພື່ອບໍລິການໃຫ້ແກ່ສັງຄົມ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ລັດ ເປັນຜູ້ກຳນົດ ຫຼັກການ, ລະບຽບການ ແລະ ນະໂຍບາຍ ກ່ຽວກັບການຈັດຕັ້ງ, ການເຄື່ອນໄຫວ, ການຄຸ້ມຄອງສະຖານການສຶກສາເອກະຊົນ.

**ມາດຕາ 77 (ໃໝ່) ຄ່າບໍລິການ ແລະ ຄ່າຮຽນ ຢູ່ສະຖານການສຶກສາເອກະຊົນ**

ຄ່າບໍລິການ ແລະ ຄ່າຮຽນ ຢູ່ສະຖານການສຶກສາເອກະຊົນ ໃຫ້ປະຕິບັດຕາມສະຖານການສຶກສາເອກະຊົນ ພາຍໃຕ້ການຄຸ້ມຄອງຂອງລັດ ແລະ ຕ້ອງແຈ້ງ ຄ່າບໍລິການ ແລະ ຄ່າຮຽນ ໃຫ້ຜູ້ຮຽນ, ພໍ່, ແມ່ ຫຼື ຜູ້ປົກຄອງຮູ້ກ່ອນການເປີດສົກຮຽນຂອງທຸກປີ.

## ໝວດທີ 3
## ການລົງທຶນຮ່ວມ

**ມາດຕາ 78 (ໃໝ່) ການລົງທຶນຮ່ວມ ລະຫວ່າງພາກລັດ ແລະ ພາກເອກະຊົນ**

ການລົງທຶນຮ່ວມ ລະຫວ່າງພາກລັດ ແລະ ພາກເອກະຊົນ ແມ່ນ ກິດຈະການລົງທຶນຮ່ວມ ລະຫວ່າງພາກລັດ ແລະ ພາກເອກະຊົນ ພາຍໃຕ້ສັນຍາລົງທຶນຮ່ວມ ເພື່ອຈັດຕັ້ງປະຕິບັດໂຄງການກໍ່ສ້າງ, ປັບປຸງໂຄງລ່າງພື້ນຖານ ຫຼື ສະໜອງການບໍລິການດ້ານວິຊາການ ໃຫ້ແກ່ສັງຄົມ.

**ມາດຕາ 79 (ໃໝ່) ເງື່ອນໄຂ ແລະ ຂັ້ນຕອນ ຂອງການລົງທຶນຮ່ວມ**

ເງື່ອນໄຂ ແລະ ຂັ້ນຕອນຂອງການລົງທຶນຮ່ວມ ລະຫວ່າງພາກລັດ ແລະ ພາກເອກະຊົນ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ໝວດທີ 4
## ກອງທຶນສົ່ງເສີມການສຶກສາ

**ມາດຕາ 80 (ໃໝ່) ກອງທຶນສົ່ງເສີມການສຶກສາ**

ກອງທຶນສົ່ງເສີມການສຶກສາ ແມ່ນ ກອງທຶນຂອງລັດ ທີ່ສ້າງຂຶ້ນ ເພື່ອສະສົມ ແລະ ລະດົມທຶນດ້ວຍຮູບການຕ່າງໆ ຈາກພາກລັດ ແລະ ພາກເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ ເພື່ອໃຫ້ມີງົບປະມານພຽງພໍ, ຍືນຍົງ ແລະ ນຳໃຊ້ເຂົ້າໃນວຽກງານສົ່ງເສີມການສຶກສາ ໃນຂອບເຂດທົ່ວປະເທດ.

**ມາດຕາ 81 (ໃໝ່) ແຫຼ່ງລາຍຮັບຂອງກອງທຶນສົ່ງເສີມການສຶກສາ**

ລາຍຮັບຂອງກອງທຶນສົ່ງເສີມການສຶກສາ ໄດ້ມາຈາກ:

1. ການປະກອບສ່ວນຂອງລັດ;
2. ການປະກອບສ່ວນຂອງສະຖານການສຶກສາ ຂອງລັດ ແລະ ເອກະຊົນ;
3. ການປະກອບສ່ວນຂອງ ບຸກຄົນ, ນິຕິບຸກຄົນ, ຄູ່ຮ່ວມພັດທະນາ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ;
4. ການເຄື່ອນໄຫວສ້າງກິດຈະກຳຕ່າງໆ;

5. ລາຍຮັບອື່ນ ທີ່ຖືກຕ້ອງຕາມກົດໝາຍ.

**ມາດຕາ 82 (ໃໝ່) ການຄຸ້ມຄອງ ແລະ ການນຳໃຊ້ ກອງທຶນສົ່ງເສີມການສຶກສາ**

ການຄຸ້ມຄອງ ແລະ ການນຳໃຊ້ ກອງທຶນສົ່ງເສີມການສຶກສາ ຕ້ອງຮັບປະກັນຄວາມໂປ່ງໃສ ແລະ ສາມາດກວດສອບໄດ້ ໂດຍສອດຄ່ອງກັບກົດໝາຍວ່າດ້ວຍງົບປະມານແຫ່ງລັດ, ກົດໝາຍອື່ນ ແລະ ລະບຽບການທີ່ກ່ຽວຂ້ອງ.

ສຳລັບລາຍລະອຽດ ກ່ຽວກັບການຄຸ້ມຄອງ ແລະ ການນຳໃຊ້ ກອງທຶນສົ່ງເສີມການສຶກສາ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ພາກທີ X
## ຄວາມຮັບຜິດຊອບຂອງ ສັງຄົມ ແລະ ຄອບຄົວ ຕໍ່ການສຶກສາ

**ມາດຕາ 83 (ປັບປຸງ) ຄວາມຮັບຜິດຊອບຂອງສັງຄົມ**

ຊຸມຊົນ ແລະ ການຈັດຕັ້ງສັງຄົມ ມີຄວາມຮັບຜິດຊອບໃນການປະກອບສ່ວນດ້ານ ທຶນ, ວັດຖຸປະກອນເຂົ້າໃນການພັດທະນາການສຶກສາ, ປົກປັກຮັກສາ ແລະ ບູລະນະ ສະຖານການສຶກສາ ດ້ວຍຫຼາຍຮູບການ ລວມທັງການສົ່ງເສີມການສຶກສາ.

ບັນດາຫົວໜ່ວຍທຸລະກິດ ແລະ ຜູ້ປະກອບການອື່ນ ມີຄວາມຮັບຜິດຊອບ ໃຫ້ຄວາມຮ່ວມມື, ສະໜັບສະໜູນ ແລະ ອຳນວຍຄວາມສະດວກໃຫ້ ຄູ, ຜູ້ຮຽນ ເຂົ້າໄປສຶກສາຄົ້ນຄວ້າ, ທັດສະນະສຶກສາ ແລະ ຝຶກງານ ຢູ່ບ່ອນປະກອບການຂອງຕົນ ລວມທັງການສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກໃຫ້ຜູ້ຮຽນ ທີ່ມີເກນອາຍຸອອກແຮງງານໄດ້ເຮັດວຽກຕາມທີ່ໄດ້ກຳນົດໄວ້ໃນກົດໝາຍທີ່ກ່ຽວຂ້ອງ.

ສື່ມວນຊົນ ມີຄວາມຮັບຜິດຊອບ ໂຄສະນາ ເຜີຍແຜ່ ວຽກງານສຶກສາ ດ້ວຍຫຼາຍຮູບການຕາມເງື່ອນໄຂ ແລະ ຄວາມສາມາດຕົວຈິງ.

**ມາດຕາ 84 (ປັບປຸງ) ຄວາມຮັບຜິດຊອບຂອງຄອບຄົວ**

ຄອບຄົວ ມີຄວາມຮັບຜິດຊອບ ປະກອບສ່ວນທາງດ້ານ ສະຕິປັນຍາ, ທຶນ, ພາຫະນະ, ວັດຖຸປະກອນ, ສື່ການຮຽນ ການສອນ, ການກໍ່ສ້າງ, ການປົກປັກຮັກສາ ແລະ ບູລະນະ ສະຖານການສຶກສາ ຮ່ວມກັບຄະນະພັດທະນາການສຶກສາ, ສະຖານການສຶກສາ ແລະ ຄູ ເພື່ອສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກແກ່ລູກຫຼານໃຫ້ໄດ້ຮັບການສຶກສາທີ່ດີ, ເຂົ້າຮ່ວມກິດຈະກຳ ແລະ ສຶກສາອົບຮົມ ພວກກ່ຽວ ໃຫ້ເປັນພົນລະເມືອງດີຂອງຊາດ.

ສຳລັບການສຶກສາພາກບັງຄັບນັ້ນ ຄອບຄົວ ມີຄວາມຮັບຜິດຊອບໃນການ ຊຸກຍູ້, ສົ່ງເສີມ ແລະ ອຳນວຍຄວາມສະດວກ ໃຫ້ເດັກໃນເກນອາຍຸ ໄດ້ເຂົ້າຮຽນ ແລະ ຮຽນຈົບຈົບ ໂດຍບໍ່ໃຫ້ມີການປະລະການຮຽນ.

# ພາກທີ XI
# ຂໍ້ຫ້າມ

**ມາດຕາ 85 (ປັບປຸງ) ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ຂັດຂວາງການເຄື່ອນໄຫວ ວຽກງານ, ກິດຈະກຳ ກ່ຽວກັບການສຶກສາ;
2. ສວຍໃຊ້ໜ້າທີ່ຕຳແໜ່ງ ເພື່ອຫາຜົນປະໂຫຍດແກ່ ຕົນ, ຄອບຄົວ, ຈຸ້ມເຈື້ອ ແລະ ພັກພວກຂອງຕົນ;
3. ເຄື່ອນໄຫວທີ່ເປັນການແຕະຕ້ອງເຖິງ ກຽດສັກສີ ຫຼື ບົດບາດຂອງ ຄູ, ບຸກຄະລາກອນການສຶກສາ ແລະ ສະຖານການສຶກສາ;
4. ໂຄສະນາ ຊວນເຊື່ອ ກ່ຽວກັບວຽກງານສຶກສາ ເກີນຄວາມເປັນຈິງ;
5. ບໍລິການ ສິ່ງມຶນເມົາ, ສິ່ງເສບຕິດ, ຫຼິ້ນການພະນັນທີ່ຕ້ອງຫ້າມ, ບັນເທີງ ແລະ ສິ່ງສຽງດັງ ຢູ່ໃນບໍລິເວນ ແລະ ບ່ອນໃກ້ຄຽງ ສະຖານການສຶກສາ;
6. ນຳໃຊ້ກາໝາຍ, ເຄື່ອງແບບ ແລະ ຕາປະທັບ ຂອງອົງການຄຸ້ມຄອງວຽກງານສຶກສາ ໂດຍບໍ່ໄດ້ຮັບອະນຸຍາດ;
7. ປະພຶດໃນສິ່ງທີ່ບໍ່ຖືກຕ້ອງ ຕາມຮີດຄອງປະເພນີອັນດີງາມຂອງຊາດ;
8. ເຜີຍແຜ່ ສິ່ງລາມົກ ອະນາຈານ ທີ່ຂັດກັບວັດທະນະທຳ ແລະ ຮີດຄອງປະເພນີອັນດີງາມຂອງຊາດ, ທ້ອງຖິ່ນ ພາຍໃນສະຖານການສຶກສາ;
9. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 86 (ປັບປຸງ) ຂໍ້ຫ້າມສຳລັບສະຖານການສຶກສາ**

ຫ້າມສະຖານການສຶກສາ ມີພຶດຕິກຳ ດັ່ງນີ້:

1. ຊື້ ຂາຍ, ໂຄສະນາ, ສົ່ງເສີມ ເຄື່ອງດື່ມທີ່ມີທາດເຫຼົ້າ, ສິ່ງເສບຕິດ, ອາຫານ ແລະ ເຄື່ອງດື່ມທີ່ບໍ່ມີຄຸນນະພາບ;
2. ໂອນ ແລະ ແລກປ່ຽນ ອາຄານ ຫຼື ສິດນຳໃຊ້ທີ່ດິນ ແລະ ຊັບສິນອື່ນ ຂອງຕົນ ໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ ໂດຍບໍ່ໄດ້ຮັບອະນຸຍາດ ຈາກຂະແໜງການສຶກສາທິການ ແລະ ກິລາ;
3. ນຳໃຊ້ເປັນບ່ອນດຳເນີນທຸລະກິດທີ່ ເປັນຜົນກະທົບຕໍ່ການຮຽນ ການສອນ;
4. ກຳນົດ ຄ່າທຳນຽມ, ຄ່າບໍລິການ ແລະ ຄ່າຮຽນ ໂດຍບໍ່ສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ແລະ/ຫຼື ບໍ່ໄດ້ຮັບອະນຸຍາດຈາກຂະແໜງການສຶກສາທິການ ແລະ ກິລາ;
5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 87 ຂໍ້ຫ້າມສຳລັບຜູ້ຮຽນ**

ຫ້າມຜູ້ຮຽນ ມີພຶດຕິກຳ ດັ່ງນີ້:

1. ລະເມີດລະບຽບວິໄນຂອງສະຖານການສຶກສາ;
2. ໃຫ້ສິນບົນແກ່ ຄູ ແລະ ບຸກຄະລາກອນການສຶກສາ;
3. ທຸດຈະລິດ ໃນການຮຽນ, ການຝຶກອົບຮົມວິຊາຊີບ, ການສອບເສັງ ແລະ ການທົດສອບ;

4. ພົວພັນ, ຊື້ ຂາຍ, ເສບ ສິ່ງເສບຕິດ, ສິ່ງມຶນເມົາ, ສິ່ງລາມົກ ອະນາຈານ, ຫຼິ້ນການພະນັນທຸກປະເພດ ຢູ່ສະຖານການສຶກສາ ແລະ ສະຖານທີ່ອື່ນ ເຊັ່ນ ຮ້ານກິນດື່ມ, ຮ້ານສະໜຸກເກີ, ຮ້ານເກມ, ຮ້ານບັນເທີງ ແລະ ນຸ່ງເຄື່ອງແບບນັກຮຽນເຂົ້າໃນສະຖານທີ່ດັ່ງກ່າວ;

5. ພົວພັນຊູ້ສາວ ທີ່ຂັດກັບ ກົດໝາຍ, ກົດລະບຽບຂອງສະຖານການສຶກສາ, ວັດທະນະທຳ ແລະ ຮີດຄອງປະເພນີອັນດີງາມ ຂອງຊາດ, ທ້ອງຖິ່ນ;

6. ຄອບຄອງ ອາວຸດ, ວັດຖຸລະເບີດ ແລະ ສານເຄມີ ທີ່ຕ້ອງຫ້າມ;

7. ສ້າງ ກຸ່ມກ້ອນ, ພັກພວກ ເພື່ອກໍ່ຄວາມບໍ່ສະຫງົບ ຢູ່ໃນສະຖານການສຶກສາ ແລະ ສັງຄົມ;

8. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 88 (ປັບປຸງ) ຂໍ້ຫ້າມສຳລັບຄູ**

ຫ້າມຄູ ມີພຶດຕິກຳ ດັ່ງນີ້:

1. ຂາດຄວາມຮັບຜິດຊອບ ໃນການປະຕິບັດໜ້າທີ່ຕໍ່ການສິດສອນ;

2. ສວຍໃຊ້ໜ້າທີ່, ໃຫ້ ຫຼື ຮັບ ສິນບົນ ເພື່ອຫາຜົນປະໂຫຍດແກ່ ຕົນ, ຄອບຄົວ, ຈຸ້ມເຈື້ອ ແລະ ພັກພວກຂອງຕົນ;

3. ສວຍໃຊ້ ວັດຖຸ, ສິ່ງຂອງ ແລະ ຊັບສິນ ທີ່ເປັນຂອງສ່ວນລວມ ເພື່ອຜົນປະໂຫຍດແກ່ຕົນ;

4. ນຳເອົາ ວັດຖຸ, ສິ່ງຂອງ ແລະ ຊັບສິນ ທີ່ເປັນຂອງສ່ວນລວມ ມາເປັນຂອງຕົນ;

5. ບິດເບືອນເນື້ອໃນຫຼັກສູດ, ນຳໃຊ້ການສອນເພີ່ມ ໂດຍເປັນການບັງຄັບ;

6. ທຸດຈະລິດ ໃນການຈັດຕັ້ງການຮຽນ ການສອນ, ການຝຶກອົບຮົມວິຊາຊີບ, ການສອບເສັງ ແລະ ການທົດສອບ;

7. ໃຊ້ຄວາມຮຸນແຮງ ຕໍ່ຜູ້ຮຽນ ເປັນຕົ້ນ ທຸບຕີ, ຮ້າຍດ່າ, ທາລຸນ, ລຳອຽງ;

8. ແບ່ງແຍກຄວາມສາມັກຄີ ຫຼື ສ້າງຄວາມປັ່ນປ່ວນພາຍໃນສະຖານການສຶກສາ ແລະ ສັງຄົມ;

9. ເປີດເຜີຍ ຫຼື ເຜີຍແຜ່ ສິ່ງລາມົກ ອະນາຈານ;

10. ພົວພັນ, ຊື້ ຂາຍ, ເສບ ສິ່ງເສບຕິດ ແລະ ຫຼິ້ນການພະນັນ ທຸກປະເພດທີ່ຜິດກົດໝາຍ;

11. ນຸ່ງເຄື່ອງແບບຄູ ເຂົ້າໃນ ຮ້ານບັນເທີງ ຫຼື ສະຖານທີ່ອື່ນ ທີ່ບໍ່ເໝາະສົມ;

12. ໂຄສະນາສິ່ງເສີມ ຫຼື ດື່ມ ເຄື່ອງດື່ມທີ່ມີທາດເຫຼົ້າ ໃນສະຖານການສຶກສາ;

13. ພົວພັນຊູ້ສາວ ຫຼື ຊຸກຍູ້ສົ່ງເສີມ ໃຫ້ຜູ້ຮຽນ ກະທຳຜິດຕໍ່ ກົດໝາຍ, ກົດລະບຽບຂອງສະຖານການສຶກສາ, ວັດທະນະທຳ ແລະ ຮີດຄອງປະເພນີອັນດີງາມ ຂອງຊາດ, ທ້ອງຖິ່ນ;

14. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 89 (ປັບປຸງ) ຂໍ້ຫ້າມສຳລັບບຸກຄະລາກອນການສຶກສາ**

ຫ້າມບຸກຄະລາກອນການສຶກສາ ມີພຶດຕິກຳ ດັ່ງນີ້:

1. ຂາດຄວາມຮັບຜິດຊອບ ໃນການປະຕິບັດໜ້າທີ່ຂອງຕົນ;

2. ສໍ້ລາດບັງຫຼວງ, ສວຍໃຊ້ໜ້າທີ່ຕຳແໜ່ງ, ຮັບ ແລະ ໃຫ້ສິນບົນ, ເປີດເຜີຍຄວາມລັບ ເພື່ອຫາຜົນປະໂຫຍດແກ່ ຕົນ, ຄອບຄົວ, ຈຸ້ມເຈື້ອ ແລະ ພັກພວກຂອງຕົນ;

3. ສວຍໃຊ້ ວັດຖຸ, ສິ່ງຂອງ ແລະ ຊັບສິນ ທີ່ເປັນຂອງສ່ວນລວມ ເພື່ອຜົນປະໂຫຍດແກ່ຕົນ;

4. ທຸດຈະລິດ ໃນການຈັດຕັ້ງການຮຽນ ການສອນ, ການຝຶກອົບຮົມວິຊາຊີບ, ການສອບເສັງ ແລະ ການທົດສອບ;

5. ສ້າງ ກຸ່ມກ້ອນ, ພັກພວກ ເພື່ອແບ່ງແຍກຄວາມສາມັກຄີ ຫຼື ສ້າງຄວາມບໍ່ສະຫງົບ ໃນອົງການຄຸ້ມຄອງວຽກງານສຶກສາ, ໃນສະຖານການສຶກສາ ແລະ ສັງຄົມ;

6. ຊື້ ຂາຍ, ພົວພັນກັບສິ່ງເສບຕິດ ແລະ ຫຼິ້ນການພະນັນທຸກປະເພດທີ່ຜິດກົດໝາຍ;

7. ພົວພັນຊູ້ສາວ ທີ່ຂັດກັບກົດໝາຍ, ກົດລະບຽບຂອງສະຖານການສຶກສາ, ວັດທະນະທຳ ແລະ ຮີດຄອງປະເພນີອັນດີງາມຂອງ ຊາດ, ຂອງທ້ອງຖິ່ນ;

8. ເປີດເຜີຍ ຫຼື ເຜີຍແຜ່ ສິ່ງລາມົກ ອະນາຈານ;

9. ໂຄສະນາສິ່ງເສີມ ເຄື່ອງດື່ມທີ່ມີທາດເຫຼົ້າ ໃນສະຖານການສຶກສາ;

10. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

### ມາດຕາ 90 (ປັບປຸງ) ຂໍ້ຫ້າມສຳລັບຄອບຄົວ

ຫ້າມຄອບຄົວ ມີພຶດຕິກຳ ດັ່ງນີ້:

1. ກີດກັ້ນ, ລຳອຽງລູກ ແລະ ຜູ້ຢູ່ໃຕ້ການຄຸ້ມຄອງຂອງຕົນ ໃນການສຶກສາ;
2. ສະແດງພຶດຕິກຳທີ່ສົ່ງເສີມ ເດັກ ຫຼື ຜູ້ຮຽນ ໄປໃນທາງທີ່ບໍ່ຖືກຕ້ອງ;
3. ໃຊ້ແຮງງານຜູ້ຢູ່ໃຕ້ການຄຸ້ມຄອງຂອງຕົນ ຊຶ່ງມີຜົນສະທ້ອນເຖິງການຮຽນ;
4. ຊຸກຍູ້ ແລະ ຍຸຍົງ ໃຫ້ເດັກ ຫຼື ຜູ້ຮຽນ ປະລະການຮຽນ;
5. ໃຫ້ສິນບົນ ແກ່ ຄູ ແລະ ບຸກຄະລາກອນການສຶກສາ;
6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

## ພາກທີ XII
## ສະພາທີ່ປຶກສາການສຶກສາ

### ມາດຕາ 91 (ປັບປຸງ) ສະພາທີ່ປຶກສາການສຶກສາ

ສະພາທີ່ປຶກສາການສຶກສາ ແມ່ນ ການຈັດຕັ້ງໜຶ່ງ ທີ່ບໍ່ປະຈຳການ ມີພາລະບົດບາດໃນການໃຫ້ຄຳປຶກສາດ້ານນະໂຍບາຍ, ການມີສ່ວນຮ່ວມ ໃນການພັດທະນາການສຶກສາ.

ສະພາທີ່ປຶກສາການສຶກສາ ຖືກແຕ່ງຕັ້ງ ໂດຍນາຍົກລັດຖະມົນຕີ ຕາມການສະເໜີຂອງລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ແລະ ມີຫ້ອງການກະຊວງສຶກສາທິການ ແລະ ກິລາ ເປັນກອງເລຂາ.

### ມາດຕາ 92 (ໃໝ່) ໂຄງປະກອບຂອງສະພາທີ່ປຶກສາການສຶກສາ

ສະພາທີ່ປຶກສາການສຶກສາ ປະກອບດ້ວຍ:

1. ຮອງນາຍົກລັດຖະມົນຕີ ເປັນປະທານ;
2. ລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ເປັນຮອງປະທານ ທັງເປັນຜູ້ປະຈຳການ;
3. ຮອງລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ເປັນກຳມະການ;
4. ຮອງລັດຖະມົນຕີກະຊວງທີ່ກ່ຽວຂ້ອງ ເປັນກຳມະການ;
5. ຜູ້ຕາງໜ້າສະມາຄົມການສຶກສາພາກເອກະຊົນ ເປັນກຳມະການ;
6. ຜູ້ຊົງຄຸນວຸດທິ ເປັນກຳມະການ;
7. ຜູ້ຕາງໜ້າ ພາກສ່ວນທີ່ກ່ຽວຂ້ອງ ເປັນກຳມະການ;
8. ຫົວໜ້າຫ້ອງການກະຊວງສຶກສາທິການ ແລະ ກິລາ ເປັນກຳມະການ ທັງເປັນຫົວໜ້າກອງເລຂາ.

ບຸກຄະລາກອນຂອງສະພາທີ່ປຶກສາການສຶກສາ ອາດມີການປ່ຽນແປງ ຕາມການຕົກລົງຂອງນາຍົກລັດຖະມົນຕີ.

ການຈັດຕັ້ງ ແລະ ການເຄື່ອນໄຫວຂອງສະພາທີ່ປຶກສາການສຶກສາ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ພາກທີ XIII
## ການຄຸ້ມຄອງ ແລະ ການກວດກາ ວຽກງານສຶກສາ
### ໝວດທີ 1
### ການຄຸ້ມຄອງວຽກງານສຶກສາ

**ມາດຕາ 93 ອົງການຄຸ້ມຄອງວຽກງານສຶກສາ**

ລັດຖະບານ ຄຸ້ມຄອງວຽກງານສຶກສາ ຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງສຶກສາທິການ ແລະ ກິລາ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ, ຄະນະພັດທະນາການສຶກສາ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງວຽກງານສຶກສາ ປະກອບດ້ວຍ:

1. ກະຊວງສຶກສາທິການ ແລະ ກິລາ;
2. ພະແນກສຶກສາທິການ ແລະ ກິລາ ນະຄອນຫຼວງ, ແຂວງ;
3. ຫ້ອງການສຶກສາທິການ ແລະ ກິລາ ເມືອງ, ນະຄອນ;
4. ສະຖານການສຶກສາ.

**ມາດຕາ 94 (ປັບປຸງ) ສິດ ແລະ ໜ້າທີ່ ຂອງກະຊວງສຶກສາທິການ ແລະ ກິລາ**

ໃນການຄຸ້ມຄອງວຽກງານສຶກສາ ກະຊວງສຶກສາທິການ ແລະ ກິລາ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າສ້າງ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ແລະ ລະບຽບການ ກ່ຽວກັບວຽກງານສຶກສາ ເພື່ອສະເໜີລັດຖະບານ ພິຈາລະນາ;
2. ຜັນຂະຫຍາຍ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ແລະ ລະບຽບການ ກ່ຽວກັບວຽກງານສຶກສາ ເປັນແຜນການ, ແຜນງານ, ໂຄງການ ແລະ ຈັດຕັ້ງປະຕິບັດ;
3. ໂຄສະນາ ເຜີຍແຜ່ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານສຶກສາ;
4. ອອກ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບການຄຸ້ມຄອງ ແລະ ບໍລິຫານການສຶກສາ;
5. ສ້າງ, ພັດທະນາ ຫຼັກສູດ, ອຸປະກອນ, ສື່ການຮຽນ ການສອນ ໃນແຕ່ລະໄລຍະ, ສິ່ງອຳນວຍຄວາມສະດວກຕ່າງໆ, ຊີ້ນຳ ການຈັດຕັ້ງຝຶກອົບຮົມ ແລະ ການນຳໃຊ້;
6. ຊີ້ນຳການປະຕິບັດການສຶກສາພາກບັງຄັບ ແລະ ການລຶບລ້າງຄວາມບໍ່ຮູ້ໜັງສື ແລະ ຍົກລະດັບການສຶກສາ ຕິດພັນກັບການຝຶກອົບຮົມວິຊາຊີບຂັ້ນພື້ນຖານ;
7. ກຳນົດມາດຕະຖານການສຶກສາ ແລະ ສະຖານການສຶກສາ;
8. ບຳລຸງ, ສ້າງ, ນຳໃຊ້, ຄຸ້ມຄອງ ຄູ ແລະ ບຸກຄະລາກອນການສຶກສາ;
9. ຄຸ້ມຄອງບັນດາ ມະຫາວິທະຍາໄລ, ສະຖາບັນ ແລະ ສະຖານການສຶກສາອື່ນ ຕາມລະບຽບການ;

10. ຄົ້ນຄວ້າ ພິຈາລະນາ ການສ້າງຕັ້ງ, ໂຈະ ຫຼື ຍຸບເລີກ ສະຖານການສຶກສາ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງຕົນ;

11. ຄຸ້ມຄອງ, ນຳໃຊ້ ປົກປັກຮັກສາ ທີ່ດິນ, ອາຄານ, ສະຖານທີ່ຂອງຂະແໜງການສຶກສາທິການ ແລະ ກິລາ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງຕົນ;

12. ຊີ້ນຳ, ຕິດຕາມ, ຊຸກຍູ້ ແລະ ປະເມີນຜົນການປະຕິບັດ ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານສຶກສາ;

13. ຮັບ, ພິຈາລະນາ ແລະ ແກ້ໄຂ ຄຳສະເໜີ ກ່ຽວກັບວຽກງານສຶກສາ;

14. ປະສານສົມທົບກັບການຈັດຕັ້ງຂອງລັດ ແລະ ການຈັດຕັ້ງອື່ນ ກ່ຽວກັບວຽກງານສຶກສາ;

15. ພົວພັນຮ່ວມມື ກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານສຶກສາ;

16. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານສຶກສາ ຕໍ່ລັດຖະບານ ຢ່າງເປັນປົກກະຕິ;

17. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 95 (ປັບປຸງ) ສິດ ແລະ ໜ້າທີ່ ຂອງພະແນກສຶກສາທິການ ແລະ ກິລາ ນະຄອນຫຼວງ, ແຂວງ**

ໃນການຄຸ້ມຄອງວຽກງານສຶກສາ ພະແນກສຶກສາທິການ ແລະ ກິລາ ນະຄອນຫຼວງ, ແຂວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຜັນຂະຫຍາຍ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ແລະ ລະບຽບການ ກ່ຽວກັບວຽກງານສຶກສາ ເປັນ ແຜນການ, ແຜນງານ, ໂຄງການ ແລະ ຈັດຕັ້ງປະຕິບັດ;

2. ໂຄສະນາ ເຜີຍແຜ່ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານສຶກສາ;

3. ຈັດຕັ້ງປະຕິບັດ ການສຶກສາພາກບັງຄັບ, ການລຶບລ້າງຄວາມບໍ່ຮູ້ໜັງສື ແລະ ຍົກລະດັບການສຶກສາ ຕິດພັນກັບການຝຶກອົບຮົມວິຊາຊີບຂັ້ນພື້ນຖານ;

4. ສະເໜີແຜນການ ບຳລຸງ, ສ້າງ, ນຳໃຊ້ ຄູ ແລະ ບຸກຄະລາກອນການສຶກສາ;

5. ຄຸ້ມຄອງບັນດາ ວິທະຍາໄລ, ມັດທະຍົມສຶກສາຕອນປາຍ, ມັດທະຍົມສົມບູນ ແລະ ສະຖານການສຶກສາອື່ນ ຕາມລະບຽບການ;

6. ຄົ້ນຄວ້າ ພິຈາລະນາ ການສ້າງຕັ້ງ, ໂຈະ ຫຼື ຍຸບເລີກ ສະຖານການສຶກສາ;

7. ຄຸ້ມຄອງ, ບັນຈຸ ແລະ ສັບຊ້ອນ ຄູ ແລະ ບຸກຄະລາກອນການສຶກສາ;

8. ຊີ້ນຳ, ຊຸກຍູ້ , ຕິດຕາມ ແລະ ປະເມີນຜົນ ການປະຕິບັດ ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານສຶກສາ;

9. ຮັບ, ພິຈາລະນາ ແລະ ແກ້ໄຂ ຄຳສະເໜີ ກ່ຽວກັບວຽກງານສຶກສາ;

10. ປະສານສົມທົບກັບ ການຈັດຕັ້ງຂອງລັດ ແລະ ການຈັດຕັ້ງອື່ນ ກ່ຽວກັບວຽກງານສຶກສາ;

11. ພົວພັນຮ່ວມມື ກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານສຶກສາ ຕາມການມອບໝາຍ;

12. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານສຶກສາ ຕໍ່ ກະຊວງສຶກສາທິການ ແລະ ກິລາ ແລະ ຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ ຢ່າງເປັນປົກກະຕິ;

13. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 96 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຫ້ອງການສຶກສາທິການ ແລະ ກິລາ ເມືອງ, ນະຄອນ**

ໃນການຄຸ້ມຄອງວຽກງານສຶກສາ ຫ້ອງການສຶກສາທິການ ແລະ ກິລາ ເມືອງ, ເທດສະບານ, ນະຄອນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານສຶກສາ;
2. ເຜີຍແຜ່ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານສຶກສາ;
3. ຈັດຕັ້ງປະຕິບັດ ການສຶກສາພາກບັງຄັບ, ການລຶບລ້າງຄວາມບໍ່ຮູ້ໜັງສື ແລະ ຍົກລະດັບການສຶກ ສາ ຕິດພັນກັບການຝຶກອົບຮົມວິຊາຊີບຂັ້ນພື້ນຖານ;
4. ສະເໜີແຜນການ ບຳລຸງ, ສ້າງ, ນຳໃຊ້ ຄູ ແລະ ບຸກຄະລາກອນການສຶກສາ;
5. ຄຸ້ມຄອງສະຖານການສຶກສາ ກ່ອນໄວຮຽນ, ປະຖົມສຶກສາ, ມັດທະຍົມສຶກສາຕອນຕົ້ນ ແລະ ສະຖານການສຶກສາອື່ນ ຕາມລະບຽບການ;
6. ຄົ້ນຄວ້າ ພິຈາລະນາ ການສ້າງຕັ້ງ, ໂຈະ ຫຼື ຍຸບເລີກ ສະຖານການສຶກສາ;
7. ຄຸ້ມຄອງ, ບັນຈຸ, ສັບຊ້ອນ ຄູ ແລະ ບຸກຄະລາກອນການສຶກສາ;
8. ຊີ້ນຳ, ຊຸກຍູ້, ຕິດຕາມ ແລະ ປະເມີນຜົນ ການປະຕິບັດ ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານສຶກສາ;
9. ຮັບ, ພິຈາລະນາ ແລະ ແກ້ໄຂ ຄຳສະເໜີ ກ່ຽວກັບວຽກງານສຶກສາ;
10. ປະສານສົມທົບກັບ ການຈັດຕັ້ງຂອງລັດ ແລະ ການຈັດຕັ້ງອື່ນ ກ່ຽວກັບວຽກງານສຶກສາ;
11. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານສຶກສາ ຕໍ່ພະແນກສຶກສາທິການ ແລະ ກິລາ ນະຄອນຫຼວງ, ແຂວງ ແລະ ຄະນະກຳມະການປົກຄອງ ເມືອງ, ນະຄອນ ຢ່າງເປັນປົກກະຕິ;
12. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 97 (ປັບປຸງ) ສິດ ແລະ ໜ້າທີ່ ຂອງສະຖານການສຶກສາ**

ໃນການຄຸ້ມຄອງວຽກງານສຶກສາ ຂອງສະຖານການສຶກສາ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມ ຮັບຜິດຊອບຂອງຕົນ ດັ່ງນີ້:

1. ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ແລະ ລະບຽບການ ກ່ຽວກັບວຽກງານສຶກສາ;
2. ອອກລະບຽບການ ກ່ຽວກັບການຄຸ້ມຄອງ ແລະ ບໍລິຫານການສຶກສາ ຕາມຈຸດພິເສດຂອງຕົນ;
3. ຈັດຕັ້ງການຮຽນ ການສອນ ໃຫ້ມີຄຸນນະພາບ, ຄົບເນື້ອໃນຫຼັກສູດ ຕາມ ສາມລັກສະນະ ຫ້າຫຼັກມູນ ຂອງການສຶກສາ, ຄົ້ນຄວ້າວິທະຍາສາດ ແລະ ຍົ້ງຢືນການສຶກສາ ຕາມຂັ້ນຂອງຜູ້ຮຽນ;
4. ໃຫ້ການບໍລິການດ້ານວິຊາການ ແກ່ສັງຄົມ ແລະ ຊຸມຊົນ ດ້ວຍຫຼາຍຮູບແບບ ຕາມຄວາມ ສາມາດຕົວຈິງ;
5. ຈັດຕັ້ງການປະເມີນຕົນເອງ, ວາງແຜນພັດທະນາສະຖານການສຶກສາ, ພັດທະນາການຮຽນ ການສອນ ແລະ ບຸກຄະລາກອນ ໃຫ້ມີຄຸນນະພາບ;
6. ຄຸ້ມຄອງ ແລະ ປັບປຸງການຈັດຕັ້ງຂອງຕົນ ໃຫ້ເຂັ້ມແຂງ, ມີປະສິດທິພາບ ແລະ ປະສິດທິຜົນ;
7. ຄຸ້ມຄອງ, ນຳໃຊ້, ປົກປັກຮັກສາ, ສ້ອມແປງອາຄານ, ສະຖານທີ່, ວັດຖຸປະກອນ, ສື່ການຮຽນ ການສອນ ແລະ ສິ່ງອຳນວຍຄວາມສະດວກ ຕາມລະບຽບການ;

8. ເກັບ ແລະ ຄຸ້ມຄອງ ຄ່າທຳນຽມ, ຄ່າບໍລິການ ແລະ ຄ່າຮຽນ ຕາມກົດໝາຍ ແລະ ລະບຽບການ;

9. ພິຈາລະນາ ການຮັບ ແລະ ບັນຈຸ ຄູ, ບຸກຄະລາກອນການສຶກສາ ແລະ ຜູ້ຮຽນ ຕາມແຜນການ;

10. ຍ້ອງຍໍ ແລະ ລົງວິໄນຕໍ່ ຄູ, ບຸກຄະລາກອນການສຶກສາ ແລະ ຜູ້ຮຽນ ຕາມລະບຽບການ;

11. ຮັບປະກັນການປະຕິບັດສິດສະເໝີພາບຂອງຜູ້ຮຽນ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຄູ, ບຸກຄະລາກອນການສຶກສາ ແລະ ຜູ້ຮຽນ;

12. ຕ້ານ, ສະກັດກັ້ນປາກົດການຫຍໍ້ທໍ້, ສ້າງສະພາບແວດລ້ອມທີ່ດີ, ປອດໄພ, ອະນຸລັກ ແລະ ສົ່ງເສີມວັດທະນະທຳ ແລະ ຮີດຄອງປະເພນີອັນດີງາມຂອງ ຊາດ, ທ້ອງຖິ່ນ;

13. ປະສານສົມທົບ ແລະ ຮ່ວມມືກັບ ອົງການປົກຄອງທ້ອງຖິ່ນ, ການຈັດຕັ້ງສັງຄົມ, ຊຸມຊົນ, ຜູ້ປົກຄອງ, ສະມາຄົມພໍ່ແມ່ນັກຮຽນ, ຄະນະພັດທະນາການສຶກສາ, ອົງການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ເພື່ອສົ່ງເສີມການຮຽນ ການສອນ ແລະ ການຄຸ້ມຄອງບໍລິຫານວຽກງານສຶກສາ;

14. ຕິດຕາມ, ປະເມີນຜົນວຽກງານສຶກສາ, ສະຫຼຸບ ແລະ ລາຍງານຕໍ່ຂັ້ນເທິງ ຢ່າງເປັນປົກກະຕິ;

15. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 98 (ໃໝ່) ສິດ ແລະ ໜ້າທີ່ ຂອງອົງການປົກຄອງທ້ອງຖິ່ນ**

ໃນການຄຸ້ມຄອງວຽກງານສຶກສາ ອົງການປົກຄອງທ້ອງຖິ່ນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ໂຄສະນາ ເຜີຍແຜ່ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ແລະ ລະບຽບການ ກ່ຽວກັບວຽກງານສຶກສາ;

2. ຈັດສັນງົບປະມານ, ຈັດຫາ ສະຖານທີ່, ໂຮງຮຽນ ແລະ ອຸປະກອນການຮຽນ ການສອນໃຫ້ແກ່ໂຮງຮຽນ;

3. ນຳພາ ຊີ້ນຳ ປະຊາຊົນ ໃນການປຸກລະດົມ, ຂົນຂວາຍ ໃຫ້ສົ່ງເດັກໃນເກນອາຍຸ ໄດ້ເຂົ້າຮຽນ ແລະ ຮຽນຈົນຈົບ ການສຶກສາພາກບັງຄັບ ແລະ ໄດ້ຮັບການຝຶກອົບຮົມວິຊາຊີບ;

4. ຊ່ວຍເຫຼືອ, ເບິ່ງແຍງ ແລະ ຈັດສັນ ຄູ ໃຫ້ພຽງພໍ ຕາມຄວາມຕ້ອງການ ແລະ ສ້າງເງື່ອນໄຂ ໃຫ້ຄູທີ່ຢູ່ໃນເຂດຫຍຸ້ງຍາກ ສາມາດປະຕິບັດໜ້າທີ່ ຈົນສຳເລັດ ຕາມການມອບໝາຍຂອງຂັ້ນເທິງ;

5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 99 (ໃໝ່) ສິດ ແລະ ໜ້າທີ່ ຂອງຄະນະພັດທະນາການສຶກສາ**

ໃນການຄຸ້ມຄອງວຽກງານສຶກສາ ຄະນະພັດທະນາການສຶກສາ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ໂຄສະນາ ເຜີຍແຜ່ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ແລະ ລະບຽບການ ກ່ຽວກັບວຽກງານສຶກສາ;

2. ສ້າງແຜນການ, ແຜນງານ, ໂຄງການ ແລະ ການເຄື່ອນໄຫວກິດຈະກຳຕ່າງໆ ເພື່ອພັດທະນາວຽກງານສຶກສາໃນທ້ອງຖິ່ນຕົນ;

3. ປຸກລະດົມ ແລະ ຂົນຂວາຍ ພໍ່, ແມ່, ຜູ້ປົກຄອງ ແລະ ຊຸມຊົນ ນຳສົ່ງເດັກໃນເກນອາຍຸ ໃຫ້ໄດ້ເຂົ້າຮຽນ ແລະ ຮຽນຈົບຈິບ ການສຶກສາພາກບັງຄັບ ໂດຍບໍ່ມີການປະລະການຮຽນ ແລະ ສົ່ງເສີມຜູ້ບໍ່ມີວິຊາຊີບໃຫ້ໄດ້ຮັບການຝຶກອົບຮົມດ້ານວິຊາຊີບ;

4. ຊຸກຍູ້ ແລະ ສົ່ງເສີມ ຊຸມຊົນ, ສັງຄົມ ໃຫ້ມີສ່ວນຮ່ວມໃນການປະກອບ ທຶນ, ອຸປະກອນ, ປົກປັກຮັກສາ, ປັບປຸງ ອາຄານ ແລະ ສະຖານທີ່ຮຽນ;

5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 100 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຂະແໜງການ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ**

ໃນການຄຸ້ມຄອງວຽກງານສຶກສາ ຂະແໜງການ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ມີ ສິດ ແລະ ໜ້າທີ່ ປະສານສົມທົບ ແລະ ໃຫ້ການຮ່ວມມືກັບຂະແໜງການສຶກສາທິການ ແລະ ກິລາ ຂັ້ນຂອງຕົນ ໃນການສ້າງແຜນ, ແບ່ງງົບປະມານ, ລົງທຶນ, ກໍ່ສ້າງໂຄງລ່າງພື້ນຖານ, ຈັດຫາ ແລະ ປົກປັກຮັກສາ ສະຖານການສຶກສາ, ວັດຖຸປະກອນ, ຊ່ວຍເຫຼືອ, ອຳນວຍຄວາມສະດວກ, ຕິດຕາມ ແລະ ປະເມີນຜົນ ເພື່ອໃຫ້ວຽກງານສຶກສາ ມີຄຸນນະພາບ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ.

## ໝວດທີ 2
## ການກວດກາວຽກງານສຶກສາ

**ມາດຕາ 101 (ປັບປຸງ) ອົງການກວດກາວຽກງານສຶກສາ**

ອົງການກວດກາວຽກງານສຶກສາ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນ ອົງການດຽວກັນກັບອົງການຄຸ້ມຄອງວຽກງານສຶກສາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 93 ຂອງກົດໝາຍສະບັບນີ້;

2. ອົງການກວດກາພາຍນອກ ຊຶ່ງແມ່ນ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດກາລັດແຕ່ລະຂັ້ນ, ອົງການກວດສອບແຫ່ງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ສື່ມວນຊົນ ແລະ ປະຊາຊົນ.

**ມາດຕາ 102 (ປັບປຸງ) ເນື້ອໃນການກວດກາ**

ການກວດກາວຽກງານສຶກສາ ມີເນື້ອໃນ ດັ່ງນີ້:

1. ການປະຕິບັດ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານສຶກສາ;

2. ການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານ ຂອງຂະແໜງການສຶກສາທິການ ແລະ ກິລາ;

3. ຄວາມຮັບຜິດຊອບ, ການປະພຶດ ແລະ ແບບແຜນວິທີເຮັດວຽກຂອງຄູ ແລະ ບຸກຄະລາກອນການສຶກສາ;

4. ການເຄື່ອນໄຫວຂອງຜູ້ປະກອບການດ້ານການສຶກສາ;

5. ການນຳໃຊ້ ງົບປະມານ ແລະ ການເງິນ ຂອງຂະແໜງການສຶກສາທິການ ແລະ ກິລາ;

6. ການປະຕິບັດ ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນ ທີ່ກ່ຽວຂ້ອງ;

7. ເນື້ອໃນອື່ນ ທີ່ເຫັນວ່າມີຄວາມຈຳເປັນ.

**ມາດຕາ 103 (ປັບປຸງ) ຮູບການການກວດກາ**

ການກວດກາວຽກງານສຶກສາ ມີ ສາມຮູບການ ດັ່ງນີ້:

1. ການກວດກາຕາມລະບົບປົກກະຕິ ຊຶ່ງແມ່ນ ການກວດກາທີ່ດໍາເນີນຕາມແຜນການ ຢ່າງເປັນປະຈໍາ ແລະ ມີກໍານົດເວລາອັນແນ່ນອນ;

2. ການກວດກາໂດຍມີການແຈ້ງໃຫ້ຮູ້ກ່ອນລ່ວງໜ້າ ຊຶ່ງແມ່ນ ການກວດການອກແຜນການ ເມື່ອເຫັນວ່າມີຄວາມຈໍາເປັນ ຊຶ່ງຕ້ອງແຈ້ງໃຫ້ຜູ້ຖືກກວດກາຮູ້ກ່ອນລ່ວງໜ້າ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນ ການກວດກາຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຮູ້ກ່ອນລ່ວງໜ້າ.

ໃນການດໍາເນີນການກວດກາວຽກງານສຶກສານັ້ນ ໃຫ້ປະຕິບັດຕາມກົດໝາຍ ຢ່າງເຂັ້ມງວດ.

## ພາກທີ XIV
## ວັນຄູແຫ່ງຊາດ, ກາໝາຍ, ເຄື່ອງແບບ ແລະ ຕາປະທັບ

**ມາດຕາ 104 (ປັບປຸງ) ວັນຄູແຫ່ງຊາດ**

ລັດ ກໍານົດເອົາວັນທີ 7 ຕຸລາ ເປັນວັນຄູແຫ່ງຊາດ ຊຶ່ງເປັນວັນພັກລັດຖະການ ສໍາລັບ ຄູ, ບຸກຄະລາກອນການສຶກສາ ແລະ ຜູ້ຮຽນ.

ທຸກພາກສ່ວນ ທັງລັດ ແລະ ເອກະຊົນ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງສັງຄົມ ພ້ອມດ້ວຍປະຊາຊົນ ສະເຫຼີມສະຫຼອງວັນຄູແຫ່ງຊາດ ເພື່ອລະນຶກເຖິງຄຸນງາມຄວາມດີຂອງຜູ້ເປັນຄູ.

**ມາດຕາ 105 ກາໝາຍ, ເຄື່ອງແບບ ແລະ ຕາປະທັບ**

ອົງການຄຸ້ມຄອງວຽກງານສຶກສາ ມີ ກາໝາຍ, ເຄື່ອງແບບ ຂອງຄູ, ບຸກຄະລາກອນການສຶກສາ, ເຄື່ອງແບບຂອງຜູ້ຮຽນ ແລະ ຕາປະທັບຂອງຕົນ ເພື່ອນໍາໃຊ້ເຂົ້າໃນການເຄື່ອນໄຫວວຽກງານທາງລັດຖະການ.

ກາໝາຍ, ເຄື່ອງແບບ ແລະ ຕາປະທັບດັ່ງກ່າວ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

## ພາກທີ XV
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 106 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການປະຕິບັດກົດໝາຍສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 107 (ປັບປຸງ) ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ຈະຖືກ ສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງທີ່ຕົນໄດ້ກໍ່ຂຶ້ນ ຫຼື ຖືກລົງໂທດທາງອາຍາ ຕາມກົດໝາຍ.

# ພາກທີ XVI
# ບົດບັນຍັດສຸດທ້າຍ

**ມາດຕາ 108 ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 109 (ປັບປຸງ) ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 4 ເມສາ 2025 ພາຍຫຼັງ ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ ເປັນຕົ້ນໄປ.

ກົດໝາຍສະບັບນີ້ ປ່ຽນແທນກົດໝາຍວ່າດ້ວຍການສຶກສາ ສະບັບເລກທີ 62/ສພຊ, ລົງວັນທີ 16 ກໍລະກົດ 2015.

ປະທານສະພາແຫ່ງຊາດ

ປອ ໄຊສົມພອນ ພົມວິຫານ